ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ
PHOUTHEN PASAXON

ສຳນັກງານຕັ້ງຢູ່ອາຄານລະບະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

03-09 ກຸມພາ 2023
ປີທີ 12
ສະບັບທີ 908
ລາຍສັບປະດາ

# ຄະນະມິດຕະພາບລັດຖະສະພາ ມົງໂກລີ-ລາວ ເຂົ້າຢ້ຽມຂໍ່ານັບປະທານສະພາແຫ່ງຊາດ

(ສພຊ) ຕອບສະໜອງຕາມການເຊື້ອເຊີນ ຂອງທ່ານ ພົຕ. ປອ. ວິງສັກ ພັນທະວົງ ກຳມະການຄະນະປະຈຳ, ປະທານກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ທັງເປັນປະທານຄະນະມິດຕະພາບລັດຖະສະພາ ລາວ-ມົງໂກລີ ຂອງສະພາແຫ່ງຊາດລາວ, ໃນລະຫວ່າງວັນທີ 28 ມັງກອນ-03 ກຸມພາ 2023, ທ່ານ ບາທາຣ໌ບີເລັກ ຢ້ອງຕ້ອງເຜເຣນເລ (Baatarbileg Yondonperenlei) ສະມາຊິກສະພາຄູຣານໃຫຍ່ ແຫ່ງ ມົງໂກລີ, ປະທານຄະນະມິດຕະພາບລັດຖະສະພາ ມົງໂກລີ-ລາວ ພ້ອມດ້ວຍຄະນະ ເດີນທາງມາຢ້ຽມຢາມ ແລະ ເຮັດວຽກ ຢູ່ ສປປລາວ.



ຈຸດປະສົງຂອງການຢ້ຽມຢາມ ແລະ ເຮັດວຽກໃນຄັ້ງນີ້ ກໍເພື່ອປະກອບສ່ວນຮັດແໜ້ນ ແລະ ເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມືອັນເປັນມູນເຊື້ອທີ່ດີ ລະຫວ່າງ ລາວ-ມົງໂກລີ ກໍຄືການພົວພັນຮ່ວມມືລະຫວ່າງ ສະພາແຫ່ງຊາດ ແຫ່ງ ສປປລາວ ແລະ ສະພາຄູຣານໃຫຍ່ ແຫ່ງ ມົງໂກລີ ໃຫ້ນັບມື້ນັບຂະຫຍາຍຕົວ ແລະ ເປັນຮູບປະທຳຫຼາຍຂຶ້ນ ພ້ອມທັງປະກອບສ່ວນສະເຫຼີມສະຫຼອງວັນສ້າງຕັ້ງສາຍພົວພັນການທູດ ລາວ-ມົງໂກລີ ຄົບຮອບ 60 ປີ ໃນປີ 2022 ທີ່ຜ່ານມາ.

ໃນການຢ້ຽມຢາມ ແລະ ເຮັດວຽກຄັ້ງນີ້, ຄະນະມິດຕະພາບລັດຖະສະພາ ລາວ-ມົງໂກລີ, ມົງໂກລີ-ລາວ ໄດ້ພົບປະສອງຝ່າຍນຳກັນ ທີ່ສະພາແຫ່ງຊາດ ເຊິ່ງສອງຝ່າຍໄດ້ຕີລາຄາຄືນການພົວພັນຮ່ວມມືໃນໄລຍະຜ່ານມາ ແລະ ພ້ອມກັນປຶກສາຫາລືທິດທາງ

ອ່ານຕໍ່ໜ້າ 4

# ປະທານສະພາແຫ່ງຊາດ ຢ້ຽມຢາມເມືອງໄຊບູລີ



ອ່ານຕໍ່ໜ້າ 2

# ຖະແຫຼງຂ່າວຜົນການຄົ້ນຄວ້າ ພິຈາລະນາ ແລະ ຮັບຮອງເອົາບັນຫາສຳຄັນພື້ນຖານຂອງປະເທດຊາດ

(ສພຊ) ໃນຕອນເຊົ້າວັນທີ 30 ມັງກອນ 2023 ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານຄະນະປະຈຳສະພາແຫ່ງຊາດ ໄດ້ຖະແຫຼງຂ່າວກ່ຽວກັບຜົນການຄົ້ນຄວ້າ ພິຈາລະນາ ແລະ ຮັບຮອງເອົາບັນຫາສຳຄັນພື້ນຖານຂອງປະເທດຊາດ ໃນກອງປະຊຸມສະໄໝສາມັນຂອງຄະນະປະຈຳສະພາແຫ່ງຊາດ ຊຸດທີ IX ປະຈຳເດືອນມັງກອນ 2023 ຕໍ່ສື່ມວນຊົນ ວ່າ: ກອງປະຊຸມສະໄໝສາມັນ ຂອງຄະນະປະຈຳສະພາແຫ່ງຊາດ ຊຸດທີ IX ປະຈຳເດືອນມັງກອນ 2023 ໄດ້ດຳເນີນເປັນເວລາ 2 ວັນເຕັມ ໃນລະຫວ່າງວັນທີ 30-31 ມັງກອນ 2023 ໂດຍການນຳພາຂອງທ່ານ ປອ. ໄຊສົມພອນ ພົມວິຫານ ກຳມະການກົມ



ອ່ານຕໍ່ໜ້າ 4

# ກຳມາທິການບັນດາເຜົ່າ ຮັບເຄື່ອງຊ່ວຍເຫຼືອຈາກຄຣິສຕະຈັກຂ່າວປະເສີດ ສປປລາວ



(ສພຊ) ໃນວັນທີ 30 ມັງກອນ 2023 ກຳມາທິການບັນດາເຜົ່າສະພາແຫ່ງຊາດ ໄດ້ຈັດພິທີມອບ-ຮັບເຄື່ອງຊ່ວຍເຫຼືອຂຶ້ນທີ່ສະພາແຫ່ງຊາດ ໂດຍການກ່າວຮັບຂອງທ່ານ ຄຳຈັນ ໂສຕາປະເສີດ ປະທານກຳມາທິການບັນດາເຜົ່າສະພາແຫ່ງຊາດ ແລະ ກ່າວມອບໂດຍທ່ານ ສຈ. ຄຳແພງ ມິດ

ອ່ານຕໍ່ໜ້າ 4

# ກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ສ້າງຄວາມເຂັ້ມແຂງໃຫ້ພະນັກງານ

(ສພຊ) ເພື່ອປະຕິບັດຕາມແຜນການສ້າງຄວາມເຂັ້ມແຂງ ໃຫ້ພະນັກງານຂັ້ນວິຊາການຂອງກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ສະພາແຫ່ງຊາດ ຊຸດທີ IX ແລະ ພະນັກງານຂະແໜງການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຄະນະກຳມາທິ



ອ່ານຕໍ່ໜ້າ 4



## ກອງປະຊຸມວຽກງານປະຈຳປີ 2022...

ອ່ານຕໍ່ໜ້າ 7



## ກອງປະຊຸມຄົບຄະນະ...

ອ່ານຕໍ່ໜ້າ 6



## ປະທານສະພາປະຊາຊົນແຂວງ...

ອ່ານຕໍ່ໜ້າ 5

ຊົມເຊີຍວັນສ້າງຕັ້ງສະຫະພັນກຳມະບານລາວ ຄົບຮອບ 67 ປີ (01/02/1965-01/02/2023) ຢ່າງສຸດໃຈ!

# ຍົກສູງຂີດຄວາມສາມາດໃຫ້ພະນັກງານເສນາທິການຂອງສະພາປະຊາຊົນແຂວງ




(ສພຊ) ວັນທີ 30-31 ມັງກອນ 2023 ທີ່ຫ້ອງປະຊຸມພະແນກການສຶກສາທິການ ແລະ ກິລາແຂວງ ນະຄອນຫຼວງພະບາງ ໄດ້ຈັດກອງປະຊຸມເຝິກອົບຮົມຍົກສູງຂີດຄວາມສາມາດໃຫ້ພະນັກງານເສນາທິການຂອງສະພາປະຊາຊົນຂັ້ນແຂວງ ແລະ ພະນັກງານສະຖາບັນຄົ້ນຄວ້ານິຕິກຳກ່ຽວກັບການເກັບກຳ ແລະ ສະໜອງຂໍ້ມູນ-ຂ່າວສານ, ວຽກງານຫ້ອງສະໝຸດ, ວຽກງານແກະຄຳເຫັນ ແລະ ການຄົ້ນຄວ້າເອກະສານຢູ່ໃນກອງປະຊຸມສະພາປະຊາຊົນຂັ້ນແຂວງ ໂດຍການເປັນປະທານຂອງທ່ານ ສາຍອູ ພູມສາລີ ຮອງຫົວໜ້າສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ, ເຂົ້າຮ່ວມມີຮອງຫົວໜ້າສະຖາບັນຄົ້ນຄວ້ານິຕິກຳ, ຫົວໜ້າ-ຮອງຫົວໜ້າສູນເຝິກອົບຮົມ ແລະ ສູນຂໍ້ມູນຂ່າວສານ, ຫົວໜ້າ-ຮອງຫົວໜ້າພະແນກ, ພະນັກງານ-ວິຊາການຈາກສະພາປະຊາຊົນຂັ້ນແຂວງ 9 ແຂວງ ຄື: ຜົ້ງສາລີ, ຫຼວງນ້ຳທາ, ອຸດົມໄຊ, ບໍ່ແກ້ວ, ຫຼວງພະບາງ, ໄຊຍະບູລີ, ຫົວພັນ, ຊຽງຂວາງ ແລະ ໄຊສົມບູນ ເຂົ້າຮ່ວມ.

ທັງນີ້, ເພື່ອຍົກລະດັບຄວາມຮັບຮູ້, ຄວາມເຂົ້າໃຈຂອງພະນັກງານທີ່ເປັນເສນາທິການໃຫ້ແກ່ສະພາປະຊາຊົນຂັ້ນແຂວງ ໂດຍສະເພາະຜູ້ເຂົ້າເຝິກອົບຮົມກ່ຽວກັບວຽກງານການເກັບກຳ ແລະ ສະໜອງຂໍ້ມູນ-ຂ່າວສານ, ວຽກງານຫ້ອງສະໝຸດ, ວຽກງານແກະຄຳເຫັນຂອງສະມາຊິກສະພາແຫ່ງຊາດຢູ່ໃນກອງປະຊຸມສະພາປະຊາຊົນຂັ້ນແຂວງ; ເພື່ອເຮັດໃຫ້ຜູ້ເຂົ້າເຝິກອົບຮົມທີ່ມາຈາກສະພາປະຊາຊົນຂັ້ນແຂວງ ສາມາດນຳເອົາບົດຮຽນ ແລະ ຄວາມຮູ້ຈາກການຖ່າຍທອດຂອງວິທະຍາກອນ ແລະ ການແລກປ່ຽນສົນທະນາຈາກກອງປະຊຸມໄປຜັນຂະຫຍາຍເຂົ້າໃນການຈັດຕັ້ງປະຕິບັດວຽກງານຕົວຈິງພາຍໃນແຂວງ ແລະ ວຽກງານທີ່ຕົນຮັບຜິດຊອບຢູ່ໃນສະພາປະຊາຊົນຂັ້ນແຂວງໃຫ້ມີການພັດທະນາດີຂຶ້ນ ແລະ ເພື່ອເຮັດໃຫ້ປະຊາຊົນຂັ້ນແຂວງ ມີຄວາມເຂັ້ມແຂງທາງດ້ານບຸກຄະລາກອນ ແລະ ການຈັດຕັ້ງເຄື່ອນໄຫວວຽກງານວິຊາສະເພາະຕາມພາລະບົດບາດມີຄວາມຮັບປະກັນປະສິດທິພາບ, ປະສິດທິຜົນ ແລະ ທັນເວລາ.

ກອງປະຊຸມ ໄດ້ຮັບຟັງການສະເໜີບົດຮຽນການແກະຄຳເຫັນຜູ້ແທນກອງປະຊຸມ ແລະ ສ້າງເປັນປຶ້ມປະມວນ; ຄວາມຮູ້ພື້ນຖານກ່ຽວກັບວຽກງານຫ້ອງສະໝຸດ (ການໃຫ້ບໍລິການ, ການຕິດສັນປຶ້ມ, ການເກັບເອກະສານ ແລະ ການຂຶ້ນຂວາຍຊັບພະຍາກອນປຶ້ມ) ແລະ ການເກັບກຳ ແລະ ສະໜອງຂໍ້ມູນ-ຂ່າວສານ ໃຫ້ສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ.

ກອງປະຊຸມຄັ້ງນີ້, ໄດ້ຮັບສະໜັບສະໜູນດ້ານງົບປະມານຈາກທຶນຊ່ວຍເຫຼືອລ້າຂອງອົງການຈັດຕັ້ງສາກົນແລະງົບປະມານສົມທົບຈາກຄະນະເລຂາທິການສະພາແຫ່ງຊາດ.

(ນາງ ກຸກກິກ ບຸດດາໄຊ)



## ປະທານ...

(ຕໍ່ຈາກໜ້າ 1)

(ສພຊ) ໃນວັນທີ 20 ມັງກອນຜ່ານມາ. ທ່ານ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ ພ້ອມດ້ວຍພັນລະຍາ ແລະ ຄະນະ ຈາກສະພາແຫ່ງຊາດ, ການນຳຈາກພະແນກການຕ່າງໆຂອງແຂວງສະຫວັນນະເຂດ ໄດ້ພົບປະຢ້ຽມຢາມ ຄະນະພັກ, ອົງການປົກຄອງ, ຫ້ອງການອ້ອມຂ້າງ, ພະນັກງານຫຼັກແຫຼ່ງຂອງເມືອງໄຊບູລີ ທີ່ສະໂມສອນຫ້ອງວ່າການປົກຄອງເມືອງໄຊບູລີ ແຂວງສະຫວັນນະເຂດ. ມີບັນດາຄະນະພັກ, ຄະນະປົກຄອງເມືອງ, ຫົວໜ້າຫ້ອງການ, ຄະນະຫ້ອງການ, ກຳລັງ ປກຊ-ປກສ, ພະນັກງານຫຼັກແຫຼ່ງພາຍໃນເມືອງເຂົ້າຮ່ວມ.

ໃນໂອກາດດັ່ງກ່າວ, ທ່ານ ອ່ອນລຳພັນ ບົວສີແກ້ວ ກຳມະການພັກແຂວງ, ເລຂາພັກເມືອງ ເຈົ້າເມືອງໄຊບູລີ ຕາງໜ້າການນຳເມືອງ ໄດ້ກ່າວຕ້ອນຮັບຢ່າງອົບອຸ່ນ ແລະ ລາຍງານໂດຍຫຍໍ້ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງເມືອງ ແລະ ການຜະລິດເປັນສິນຄ້າ, ການພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ, ການແກ້ໄຂບັນຫາຢາເສບຕິດພາຍໃນເມືອງ ໃນໄລຍະ 1 ປີຜ່ານມາ ແລະ ວຽກງານຈຸດສຸມທີ່ຈະຕ້ອງໄດ້ສືບຕໍ່ແກ້ໄຂໃນຕໍ່ໜ້າ ເຊິ່ງມີຫຼາຍດ້ານທີ່ພົ້ນເດັ່ນ ເປັນຕົ້ນສາມາດຈັດເກັບລາຍຮັບເຂົ້າງົບປະມານເມືອງໄດ້ 3,9 ຕື້ກວ່າກີບ ເທົ່າກັບ 104,75% ລື່ນແຜນການປີ 2022 (ແຜນການປີ 2022 ແມ່ນ 3,8 ຕື້ກວ່າກີບ) ສ້າງຕັ້ງກຸ່ມການຜະລິດໄດ້ 67 ກຸ່ມ, ນອກຈາກນີ້ ຍັງມີວຽກງານທີ່ສຳຄັນ ແລະ ສາມາດຈັດຕັ້ງປະຕິບັດໄດ້ດີອີກຫຼາຍດ້ານ.

ພາຍຫຼັງທີ່ໄດ້ຮັບຟັງການລາຍງານຂອງທ່ານເຈົ້າເມືອງໄຊບູລີ ແລ້ວ, ທ່ານປະທານສະພາແຫ່ງຊາດ ກໍໄດ້ມີຄຳເຫັນໂອ້ລົມ ແລະ ໃຫ້ທິດຊີ້ນຳໃນການຈັດຕັ້ງປະຕິບັດວຽກງານຕ່າງໆພາຍໃນເມືອງ ເປັນຕົ້ນການຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກ, ການຈັດຕັ້ງແຜນພັດທະນາເສດຖະກິດ-ສັງຄົມຂອງເມືອງ, ການຊີ້ນຳ-ນຳພາ ຂອງອົງຄະນະພັກເມືອງ ຕໍ່ການເຄື່ອນໄຫວວຽກງານຂອງຄະນະສະມາຊິກສະພາປະຊາຊົນແຂວງ ທີ່ປະຈຳຢູ່ເມືອງໄຊບູລີ, ໃນໂອກາດດຽວກັນທ່ານປະທານສະພາແຫ່ງຊາດ ພ້ອມດ້ວຍຄະນະ ຍັງໄດ້ມອບອຸປະກອນການແພດຈຳນວນໜຶ່ງ ໃຫ້ຫ້ອງການສາທາລະນະສຸກເມືອງ ເພື່ອນຳໃຊ້ເຂົ້າໃນວຽກງານວິຊາສະເພາະ.

ຈາກນັ້ນ, ຄະນະ ໄດ້ສືບຕໍ່ຢ້ຽມຢາມກຸ່ມຊາວນາບ້ານດົງຍາງ, ການກໍ່ສ້າງຄອງເໝືອງໂຄງການຊົນລະປະທານບ້ານດົງຍາງ, ການກໍ່ສ້າງຄັນຄູຕ້ານຖ້ວມບ້ານກ້າງປາ ຫາບ້ານຫາດຊາຍສູງ, ຢ້ຽມຢາມໂຄງການຈັກສູບນ້ຳຊົນລະປະທານ ບ້ານຕົ້ນແຫນ ແລະ ຢ້ຽມຢາມກຸ່ມການລ້ຽງໄກ່ແບບເປັນຟາມ ຢູ່ບ້ານມະນີລາດ.

## ເລື່ອງເດັ່ນ ຂ່າວເດັດ

\# ຄັດໂດຍ: ຫອມສະນິດ

*❐ ໃນໄລຍະຜ່ານມາ, ສປປລາວ ໄດ້ສຸມຄວາມພະຍາຍາມເປັນພິເສດ ຕໍ່ການພັດທະນາ ແລະ ເສີມສ້າງລະບົບປົກປ້ອງເດັກ ເຊິ່ງໃນເດືອນມັງກອນ 2022 ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ໄດ້ອອກ "ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະກຳມະການປົກປ້ອງ ແລະ ຊ່ວຍເຫຼືອເດັກ" ເຊິ່ງໄດ້ກຳນົດບົດບາດ, ຄວາມຮັບຜິດຊອບ ແລະ ຂັ້ນຕອນການເຮັດວຽກຂອງຄະນະກຳມະການປົກປ້ອງ ແລະ ຊ່ວຍເຫຼືອເດັກໃນຂັ້ນຕ່າງໆ ເພື່ອເປັນພື້ນຖານໃຫ້ແກ່ການປະຕິບັດວຽກງານການປົກປ້ອງ ແລະ ການຊ່ວຍເຫຼືອເດັກໃນທົ່ວປະເທດ ຢ່າງມີປະສິດທິຜົນ; ພ້ອມນັ້ນ, ຍັງໄດ້ມີແຜນດຳເນີນງານແຫ່ງຊາດ 5 ປີ ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ລະບົບປົກປ້ອງເດັກ ໃນ ສປປລາວ ເຊິ່ງຈະເລີ່ມຈັດຕັ້ງປະຕິບັດໃນໄລຍະແຕ່ປີ 2022-2026.*

***ໜສພ. ປະຊາຊົນ 30/01/2023***

*❐ ສະຫະພັນພະດຸງຄັນສາກົນ (ICM) ເປັນອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ ມີພາລະບົດບາດຮັບຮອງມາດຕະຖານສາກົນ ທັງເປັນຕົວແທນຕາງໜ້າໃຫ້ແກ່ວຽກງານຜະດຸງຄັນໃນທົ່ວໂລກ ໄດ້ປະກາດຮັບຮອງເອົາສູນການສຶກສາຜະດຸງຄັນ 3 ແຫ່ງ ໃນ ສປປລາວ ຄື: ວິທະຍາໄລວິທະຍາສາດສຸຂະພາບ ຈຳປາສັກ, ຫຼວງພະບາງ ແລະ ຊຽງຂວາງ ໄດ້ມາດຕະຖານສາກົນ ເຊິ່ງການຮັບຮອງດັ່ງກ່າວແມ່ນອີງໃສ່ຫລັກການປະຕິບັດທີ່ດີທີ່ສຸດຂອງສາກົນ.*

***ໜສພ. ປະເທດລາວ 31/01/2023***

*❐ ກະຊວງສຶກສາທິການ ແລະ ກິລາ ຮັບຮອງເນື້ອໃນຫລັກສູດ, ປຶ້ມແບບຮຽນ ແລະ ຄູ່ມືຄູ ຊັ້ນປະຖົມສຶກສາປີທີ 5 ມີ 3 ວິຊາຄື: ວິຊາພາສາລາວ, ວິທະຍາສາດ ແລະ ສິ່ງແວດລ້ອມ ແລະ ພາສາອັງກິດ ພ້ອມທັງໄດ້ຈັດພິມປຶ້ມແບບຮຽນ ແລະ ຄູ່ມືຄູ ເຊິ່ງຈະແຈກຢາຍໃຫ້ບັນດາໂຮງຮຽນທັງໝົດໃນ ສປປລາວ ໃນສົກປີ 2023-2024.*

***ໜສພ.ປະເທດລາວ 31/01/2023***

*❐ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ຈະເປີດງານຜະລິດຕະພັນລາວ ປະຈຳປີ 2023 (Made In Laos 2023) ຈະໄດ້ຈັດຂຶ້ນ ໃນລະຫວ່າງວັນທີ 10-19 ກຸມພາ 2023 ຢູ່ສູນການຄ້າ ລາວ-ໄອເຕັກ ເພື່ອເປັນການຟື້ນຟູເສດຖະກິດ ແລະ ສົ່ງເສີມຜະລິດຕະພັນລາວສູ່ສາກົນ ພາຍໃນງານຈະມີຫຼາຍຜະລິດຕະພັນ ທີ່ຜະລິດ ແລະ ປະກອບຢູ່ ສປປລາວ ເຂົ້າຮ່ວມຫລາຍກວ່າ 200 ຫ້ອງວາງສະແດງ ຈາກຫລາຍກວ່າ 130 ຜູ້ປະກອບການ ແລະ ຫົວໜ່ວຍທຸລະກິດຈາກຫລາຍຂະແໜງການເຊັ່ນ: ຂະແໜງຜະລິດຕະພັນສິນຄ້າໜຶ່ງເມືອງ ໜຶ່ງຜະລິດຕະພັນ (ໂອດ້ອບ), ຜະລິດຕະພັນເນກອິນລາວ, ຜະລິດຕະພັນຫັດຖະກຳ, ຜະລິດຕະພັນອາຫານ ແລະ ເຄື່ອງດື່ມ, ຜະລິດຕະພັນອຸດສາຫະກຳ. ນອກນີ້, ຍັງມີຜະລິດຕະພັນໄອທີ, ຂົນສົ່ງ, ທະນາຄານ ແລະ ການບໍລິການ ແລະ ຜະລິດຕະພັນລາວ ຫັດຖະກຳໄມ້ປ່ອງ, ຜະລິດຕະພັນເຟີນີເຈີ ແລະ ຜະລິດຕະພັນກະສິກຳ.*

***ໜສພ. ປະເທດລາວ 01/02/2023***

# ຜົນສຳເລັດການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ ປະຈຳປີ 2022 ແລະ ທິດທາງແຜນການເຄື່ອນໄຫວວຽກງານ ປະຈຳປີ 2023

ໃນໄລຍະດຳເນີນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ໃນວັນທີ 29 ທັນວາຜ່ານມາ, ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ ໄດ້ໃຫ້ຮູ້ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ ປະຈຳປີ 2022 ແລະ ທິດທາງແຜນການເຄື່ອນໄຫວວຽກງານ ປະຈຳປີ 2023 ເຊິ່ງສາມາດສະຫຼຸບສັງລວມໄດ້ ດັ່ງນີ້:

**I. ຕີລາຄາການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2022**

ກ. ດ້ານດີ ແລະ ຜົນສຳເລັດ

1. ດ້ານນິຕິບັນຍັດ

1.1 ສຳເລັດການຮຽບຮຽງ ແລະ ປັບປຸງບັນດາກົດໝາຍ ຈຳນວນ 9 ສະບັບ ທີ່ຮັບຮອງເອົາຢູ່ກອງປະຊຸມສະໄໝສາມັນ ເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ໄດ້ປະກາດໃຊ້ຢ່າງເປັນທາງການ;

1.2 ຕິດຕາມຊຸກຍູ້ພາກສ່ວນກ່ຽວຂ້ອງ ກະກຽມບັນດາຮ່າງກົດໝາຍ ຈຳນວນ 12 ສະບັບ, ຈັດຕັ້ງການທາບທາມຢ່າງກວ້າງຂວາງ ໃນ 6 ຈຸດ ທົ່ວປະເທດ; ຈັດກອງປະຊຸມກວດກາຄວາມພ້ອມຂອງບັນດາຮ່າງກົດໝາຍ, ລະດົມຄວາມຄິດເຫັນ ແລະ ສ້າງຄວາມເປັນເອກະພາບ ໃນກອງປະຊຸມຍົກສູງຄຸນນະພາບດ້ານເນື້ອໃນໃຫ້ແກ່ສະມາຊິກສະພາແຫ່ງຊາດ ເພື່ອເຮັດໃຫ້ບັນດາກົດໝາຍ ມີເນື້ອໃນຄົບຖ້ວນ, ສອດຄ່ອງຕາມແນວທາງນະໂຍບາຍຂອງພັກ ກ່ອນຈະນຳເຂົ້າພິຈາລະນາຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX;

1.3 ດຳເນີນກອງປະຊຸມສຳມະນາວິທະຍາສາດແນວຄວາມຄິດ ໄກສອນ ພົມວິຫານ ກ່ຽວກັບການສ້າງ, ປະຕິບັດລັດຖະທຳມະນູນ ແຫ່ງ ສປປ ລາວ ແລະ ກອງປະຊຸມສຳມະນາວິທະຍາສາດ ຄົ້ນຄວ້າການຍົກເວັ້ນບາງມາດຕາຂອງກົດໝາຍ; ຄົ້ນຄວ້າປັບປຸງແຜນການສ້າງ ແລະ ປັບປຸງກົດໝາຍແຕ່ປີ 2023-2025; ຈັດຕັ້ງກອງປະຊຸມປະເມີນການປະຕິບັດກົດໝາຍ ຂົງເຂດເສດຖະກິດ-ການເງິນ ແລະ ຂົງເຂດຍຸຕິທຳ ຈຳນວນ 8 ສະບັບ ຊຶ່ງມີບັນດາຂະແໜງການອ້ອມຂ້າງກະຊວງ, ອົງການ ແລະ ທ້ອງຖິ່ນຕ່າງໆ ຈຳນວນ 19 ພາກສ່ວນເຂົ້າຮ່ວມ;

1.4 ຄົ້ນຄວ້າ ແລະ ໃຫ້ສັດຕະຍາບັນແກ່ສົນທິສັນຍາ-ສັນຍາສາກົນ ທີ່ ສປປລາວ ເປັນພາຄີ ໄດ້ຈຳນວນ 2 ສະບັບ ຄື: ສົນທິສັນຍາແຮງງານສາກົນວ່າດ້ວຍຄວາມປອດໄພ ແລະ ສຸຂະພາບແຮງງານ, ສົນທິສັນຍາວ່າດ້ວຍຂອບແຜນງານສົ່ງເສີມຄວາມປອດໄພ ແລະ ສຸຂະພາບແຮງງານ. ນອກນັ້ນ, ໄດ້ຄົ້ນຄວ້າສົນທິສັນຍາວ່າດ້ວຍການປົກປ້ອງວັດສະດຸນິວເຄຼຍທາງກາຍະພາບ (ສະບັບປັບປຸງ);

1.5 ຄົ້ນຄວ້າຕີຄວາມໝາຍ ແລະ ອະທິບາຍກົດໝາຍໄດ້ຈຳນວນ 3 ສະບັບ ທີ່ພົວພັນກັບກົດໝາຍວ່າດ້ວຍທີ່ດິນ, ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ແລະ ກົດໝາຍວ່າດ້ວຍຄອບຄົວ; ຈັດຕັ້ງການລົງໂຄສະນາເຜີຍແຜ່ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ຢູ່ສຳນັກງານຂອງສະພາແຫ່ງຊາດ, ບັນດາກະຊວງ, ອົງການ ແລະ ຂະແໜງການຕ່າງໆ ລວມທັງເຂດເລືອກຕັ້ງຈຳນວນໜຶ່ງ.

2. ດ້ານການຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ

ສະພາແຫ່ງຊາດ ໄດ້ປະຕິບັດພາລະບົດບາດຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ ຕາມທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ ແລະ ກົດໝາຍ ໂດຍຜ່ານກອງປະຊຸມສະພາແຫ່ງຊາດ ແລະ ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ດັ່ງນີ້:

2.1 ກອງປະຊຸມສະໄໝສາມັນ ເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ພິຈາລະນາເນື້ອໃນຕ່າງໆ ຈຳນວນ 23 ເນື້ອໃນ ແລະ ອອກເປັນມະຕິກອງປະຊຸມສະພາແຫ່ງຊາດ ຈຳນວນ 20 ສະບັບ. ໃນນີ້, ວຽກງານລັດຖະບານ 9 ສະບັບ, ວຽກງານສະພາແຫ່ງຊາດ 2 ສະບັບ, ການສ້າງ ແລະ ປັບປຸງກົດໝາຍ 9 ສະບັບ. ນອກນັ້ນ, ຍັງໄດ້ຄົ້ນຄວ້າ ແລະ ກະກຽມເນື້ອໃນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ເຊິ່ງມີເນື້ອໃນຕ່າງໆ ຈຳນວນ 27 ເນື້ອໃນ ແລະ ອອກເປັນມະຕິກອງປະຊຸມສະພາແຫ່ງຊາດ ຈຳນວນ 22 ສະບັບ. ໃນນີ້, ວຽກງານລັດຖະບານ 2 ສະບັບ, ວຽກງານສະພາແຫ່ງຊາດ 4 ສະບັບ, ວຽກງານອົງການກວດສອບແຫ່ງລັດ ແລະ ວຽກງານອົງການກວດກາແຫ່ງລັດ 2 ສະບັບ, ວຽກງານອົງການໄອຍະການປະຊາຊົນສູງສຸດ ແລະ ວຽກງານສານປະຊາຊົນສູງສຸດ 2 ສະບັບ, ການສ້າງ ແລະ ປັບປຸງກົດໝາຍ 12 ສະບັບ;

2.2 ຄະນະປະຈຳສະພາແຫ່ງຊາດ ເອົາໃຈໃສ່ປະຕິບັດພາລະບົດບາດ ແທນສະພາແຫ່ງຊາດ ໃນເວລາທີ່ສະພາແຫ່ງຊາດບໍ່ໄດ້ເປີດກອງປະຊຸມດ້ວຍການດຳເນີນກອງປະຊຸມຂອງຕົນ ໄດ້ຈຳນວນ 15 ຄັ້ງ ເພື່ອພິຈາລະນາຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ ເຊິ່ງພິຈາລະນາເນື້ອໃນຕ່າງໆ ຈຳນວນ 198 ເນື້ອໃນ ແລະ ອອກເປັນມະຕິຄະນະປະຈຳສະພາແຫ່ງຊາດ ຈຳນວນ 74 ສະບັບ. ໃນນີ້, ວຽກງານລັດຖະບານ 17 ສະບັບ, ວຽກງານສະພາແຫ່ງຊາດ 11 ສະບັບ, ວຽກງານສານປະຊາຊົນສູງສຸດ 45 ສະບັບ, ວຽກງານອົງການກວດສອບແຫ່ງລັດ 1 ສະບັບ.

3. ດ້ານການຕິດຕາມກວດກາ

3.1 ສະພາແຫ່ງຊາດ ໄດ້ເອົາໃຈໃສ່ຕິດຕາມກວດກາຢູ່ກອງປະຊຸມສະໄໝສາມັນເທື່ອທີ 3, ເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ດ້ວຍການຮັບຟັງບົດລາຍງານຂອງລັດຖະບານ, ສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສຸດ, ອົງການກວດສອບແຫ່ງລັດ, ອົງການກວດກາແຫ່ງລັດ ແລະ ພາກສ່ວນກ່ຽວຂ້ອງຕ່າງໆ ຕາມກົດໝາຍກຳນົດ; ຄົ້ນຄວ້າບັນຫາພົ້ນເດັ່ນຂອງສັງຄົມ ເພື່ອໃຫ້ບັນດາກະຊວງ, ອົງການ ຈຳນວນ 37 ພາກສ່ວນ ຊີ້ແຈງ ເຊິ່ງກອງປະຊຸມສະພາແຫ່ງຊາດ ໄດ້ຮັບຟັງການຊີ້ແຈງທັງໝົດ 58 ເທື່ອຄັ້ງ, ກວມເອົາ 147 ຄຳຖາມ. ໃນນີ້, ສະມາຊິກສະພາແຫ່ງຊາດ ໄດ້ປະກອບຄຳເຫັນ, ຊັກຖາມທັງໝົດ 502 ເທື່ອທ່ານ, ກວມ 84,51% ຂອງຜູ້ລົງທະບຽນ. ພ້ອມດຽວກັນນີ້, ສະມາຊິກສະພາແຫ່ງຊາດ ກໍໄດ້ໃຫ້ຄະແນນປະເມີນຕໍ່ຄວາມຮັບຜິດຊອບຂອງບຸກຄະລາກອນທີ່ມາລາຍງານ, ຊີ້ແຈງ ແລະ ຕອບຄຳຊັກຖາມ ເຊິ່ງມີເປົ້າໝາຍຖືກປະເມີນທັງໝົດ 30 ທ່ານ, ຍິງ 6 ທ່ານ ໃນນີ້, ສະພາແຫ່ງຊາດ 7 ທ່ານ, ຍິງ 2 ທ່ານ; ລັດຖະບານ 22 ທ່ານ, ຍິງ 4 ທ່ານ ແລະ ອົງການໄອຍະການປະຊາຊົນສູງສຸດ 1 ທ່ານ. ຜົນການປະເມີນມີຜູ້ທີ່ໄດ້ຄະແນນສູງສຸດ 7-8 ຈັດຢູ່ປະເພດດີ ກວມເອົາ 98,63 % ແລະ ຄະແນນຕໍ່າສຸດ 5-6 ຈັດຢູ່ໃນປະເພດກາງ ກວມເອົາ 1,37%;

3.2 ຄະນະປະຈຳສະພາແຫ່ງຊາດ ໄດ້ເອົາໃຈໃສ່ປະຕິບັດພາລະບົດບາດຕິດຕາມກວດກາ ດ້ວຍການດຳເນີນກອງປະຊຸມຮ່ວມກັບຄະນະລັດຖະບານ 2 ຄັ້ງ ເພື່ອປຶກສາເປັນເອກະພາບໃນການແກ້ໄຂບັນຫາເຄັ່ງຮ້ອນຂອງສັງຄົມທີ່ຕິດພັນກັບເນື້ອໃນຕ່າງໆ ຈຳນວນ 21 ຫົວຂໍ້. ພ້ອມກັນນັ້ນ, ກໍໄດ້ດຳເນີນກອງປະຊຸມຮ່ວມກັບອົງການໄອຍະການປະຊາຊົນສູງສຸດ, ສານປະຊາຊົນສູງສຸດ, ອົງການກວດສອບແຫ່ງລັດ, ອົງການກວດກາແຫ່ງລັດ, ສູນກາງແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າແຫ່ງຊາດ ແລະ ອົງການຈັດຕັ້ງມະຫາ ຊົນຂັ້ນສູນກາງ ປະຈຳປີ 2022 ພາກສ່ວນລະ 1 ຄັ້ງ;

3.3 ຄະນະປະຈຳສະພາແຫ່ງຊາດ ໄດ້ເອົາໃຈໃສ່ນຳພາການເຄື່ອນໄຫວຕິດຕາມກວດກາຫົວຂໍ້ຕ່າງໆ ຢູ່ສູນກາງ ແລະ ທ້ອງຖິ່ນ ໄດ້ຈຳນວນ 35 ເທື່ອຄັ້ງ ໂດຍສຸມໃສ່ການປະຕິບັດລັດຖະທຳມະນູນ ແລະ ກົດໝາຍ, ການຜັນຂະຫຍາຍເນື້ອໃນກົດໝາຍ ເປັນນິຕິກຳໃຕ້ກົດໝາຍ, ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ຕິດພັນກັບວາລະແຫ່ງຊາດ, ການປະຕິບັດໂຄງການລົງທຶນທີ່ສົ່ງຜົນກະທົບຕໍ່ສິ່ງແວດລ້ອມ ທຳມະຊາດ ແລະ ສັງຄົມ ລວມທັງຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າ; ຊຸກຍູ້ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ຕິດຕາມກວດກາວຽກງານຕ່າງໆ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ທີ່ກົດໝາຍກຳນົດ. ນອກນັ້ນ, ໄດ້ຊີ້ນຳຄະນະເລຂາທິການສະພາແຫ່ງຊາດ ລົງເຄື່ອນໄຫວຕິດຕາມຊຸກຍູ້ວຽກງານຂອງຕົນ ຢູ່ຄະນະເລຂາທິການສະພາປະຊາຊົນຂັ້ນແຂວງ 14 ແຂວງ;

3.4 ຄະນະປະຈຳສະພາແຫ່ງຊາດ ເອົາໃຈໃສ່ປະຕິບັດພາລະບົດບາດຕິດຕາມກວດກາ ໂດຍຜ່ານການຮັບຄຳສະເໜີ, ຄຳຮ້ອງຂໍຄວາມເປັນທຳຂອງປະຊາຊົນ ລວມທັງໝົດ 921 ເລື່ອງ, ສາມາດຄົ້ນຄວ້າພິຈາລະນາ ໄດ້ຈຳນວນ 320 ເລື່ອງ; ຕ້ອນຮັບ ແລະ ໃຫ້ຄຳປຶກສາແກ່ປະຊາຊົນ 287 ຄັ້ງ; ຄົ້ນຄວ້າສັງລວມວຽກງານສາຍດ່ວນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ຈຳນວນ 487 ຫົວຂໍ້ ແລະ ນຳສົ່ງໃຫ້ກະຊວງ, ອົງການ, ຂະແໜງການ, ພາກສ່ວນກ່ຽວຂ້ອງ ຈຳນວນ 26 ພາກສ່ວນ ເພື່ອຄົ້ນຄວ້າແກ້ໄຂ.

3.5 ການຕິດຕາມກວດກາການຈັດຕັ້ງປະຕິບັດວາລະແຫ່ງຊາດ

ນັບແຕ່ກອງປະຊຸມສະໄໝວິສາມັນຂອງສະພາແຫ່ງຊາດໃນເດືອນສິງຫາ ປີ 2021 ໄດ້ຮັບຮອງເອົາສອງວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ແລະ ການແກ້ໄຂບັນຫາຢາເສບຕິດ, ຄະນະປະຈຳສະພາແຫ່ງຊາດ ເອົາໃຈໃສ່ຊີ້ນຳ-ນຳພາຊຸກຍູ້, ເຄື່ອນໄຫວຕິດຕາມຄວາມຄືບໜ້າໃນການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດດັ່ງກ່າວ ຕາມມະຕິເລກທີ 03/ສພຊ ແລະ 04/ສພຊ, ລົງວັນທີ 10 ສິງຫາ 2021 ແລະ ປະຕິບັດຕາມມະຕິກອງປະຊຸມສະພາແຫ່ງຊາດ ເລກທີ 62/ສພຊ, ລົງວັນທີ 8 ກໍລະກົດ 2022 ເຊິ່ງບັນດາທ່ານໃນຄະນະປະທານ, ຄະນະປະຈຳສະພາແຫ່ງຊາດ, ບັນດາກຳມາທິການສະພາແຫ່ງຊາດ, ຄະນະເລຂາທິການສະພາແຫ່ງຊາດ ແລະ ສະມາຊິກສະພາແຫ່ງຊາດ ໄດ້ເປັນເຈົ້າການຕິດຕາມກວດກາຕາມຂອບເຂດຄວາມຮັບຜິດຊອບຂອງຕົນໄດ້ດີພໍຄວນ.

ໃນບົດປະກອບຄຳເຫັນຂອງຜູ້ຕາງໜ້າຄະນະປະຈຳສະພາແຫ່ງຊາດ ຕໍ່ບົດລາຍງານຂອງລັດຖະບານ ກ່ຽວກັບຄວາມຄືບໜ້າການຈັດຕັ້ງຜັນຂະຫຍາຍວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ແລະ ການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ທີ່ສະເໜີຕໍ່ກອງປະຊຸມສະໄໝສາມັນເທື່ອທີ 4 ນີ້ ໄດ້ມີການຕີລາຄາຢ່າງກົງໄປກົງມາ, ຈະແຈ້ງ, ຊັດເຈນ ກ່ຽວກັບຜົນສຳເລັດ, ບັນຫາທີ່ຈະຕ້ອງໄດ້ເອົາໃຈໃສ່ໃນການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດດັ່ງກ່າວແລ້ວ. ແຕ່ຜ່ານການລົງຕິດຕາມກວດກາ, ສະພາແຫ່ງຊາດ ເຫັນວ່າ:

1) ຕໍ່ກັບການປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ມີ 4 ບັນຫາ:

- ລັດຖະບານ ໄດ້ມີການຜັນຂະຫຍາຍມະຕິຂອງສະພາແຫ່ງຊາດເປັນນິຕິກຳ, ແຜນການ ແລະ ໂຄງການລະອຽດ, ແຕ່ຂອດການປະຕິບັດຍັງຊັກຊ້າ, ບາງຂະແໜງການບໍ່ທັນເປັນເອກະພາບກັນ, ບໍ່ທັນມີການປະເມີນຄວາມຄືບໜ້າຫຼາຍ;
- ການສົ່ງເສີມການຜະລິດເພື່ອທົດແທນການນຳເຂົ້າ ແລະ ສົ່ງອອກຜະລິດຕະພັນສິນຄ້າ ບໍ່ທັນບັນລຸຕາມແຜນການ, ການກຳນົດເຂດການຜະລິດສິນຄ້າໃນທ້ອງຖິ່ນຢູ່ລຽບຕາມເສັ້ນທາງລົດໄຟ ລາວ-ຈີນ, ເສັ້ນທາງດ່ວນ ບໍ່ທັນລະອຽດຊັດເຈນ, ການປຸງແຕ່ງບໍ່ທັນຫຼາຍ; ການເຂົ້າຫາແຫຼ່ງທຶນຍັງມີຄວາມຫຍຸ້ງຍາກ;

ອ່ານຕໍ່ສະບັບໜ້າ...




## ຄະນະ...

(ຕໍ່ຈາກໜ້າ 1)

ແຜນການພົວພັນຮ່ວມມືໃນຕໍ່ໜ້າ ລະຫວ່າງ ຄະນະມິດຕະພາບລັດຖະສະພາ ລາວ-ມົງໂກລີ, ມົງໂກລີ-ລາວ ໃນນາມທີ່ເປັນກົນໄກໜຶ່ງຂອງສອງອົງການນິຕິບັນຍັດ ລາວ-ມົງໂກລີ ເພື່ອຊຸກຍູ້ ແລະ ສົ່ງເສີມການພົວພັນ ແລະ ຮ່ວມມືລະຫວ່າງສອງອົງການນິຕິບັນຍັດ, ສອງຝ່າຍໄດ້ຕີລາຄາສູງຕໍ່ສາຍພົວພັນມິດຕະພາບອັນເປັນມູນເຊື້ອ ແລະ ການຮ່ວມມືທີ່ດີລະຫວ່າງ ສປປລາວ ແລະ ມົງໂກລີ ແລະ ສອງອົງການນິຕິບັນຍັດ ກໍຄືຄະນະມິດຕະພາບລັດຖະສະພາລາວ-ມົງໂກລີ ເຊິ່ງເຫັນວ່າສອງປະເທດໄດ້ຮັບການສົ່ງເສີມການຮ່ວມມືທາງດ້ານການເມືອງເປັນສ່ວນໃຫຍ່, ແຕ່ການພົວພັນເສດຖະກິດຍັງບໍ່ທັນສູງ ເນື່ອງຈາກຈຸດພິເສດທາງດ້ານພູມີປະເທດທີ່ຢູ່ຫ່າງໄກກັນ, ແຕ່ແນວໃດກໍຕາມ ສອງຝ່າຍຈະໄດ້ພ້ອມກັນຊຸກຍູ້ໃຫ້ມີການແລກປ່ຽນການຢ້ຽມຢາມຂອງຄະນະຜູ້ແທນຂັ້ນສູງ ແຕ່ສູນກາງລົງຮອດທ້ອງຖິ່ນ ລະຫວ່າງ ສອງປະເທດ ເວົ້າລວມ, ເວົ້າສະເພາະ ລະຫ່ວາງສະພາແຫ່ງຊາດລາວ ແລະ ສະພາຄູຣານໃຫ່ຍມົງໂກລີ ໃຫ້ນັບມື້ນັບໄດ້ຮັບການໄປມາຫາສູ່ກັນຢ່າງເປັນປະຈຳ ແລະ ຕໍ່ເນື່ອງ ເປັນຕົ້ນແມ່ນສອງຝ່າຍໄດ້ມີການແລກປ່ຽນຄະນະຜູ້ແທນຢ້ຽມຢາມເຊິ່ງກັນແລະກັນ, ມີການສົ່ງສານອວຍພອນກັນໃນວັນສຳຄັນຕ່າງໆ ແລະ ສະໜັບສະໜູນ ແລະ ຊ່ວຍເຫຼືອເຊິ່ງກັນແລະກັນ, ໃນເວທີລັດຖະສະພາພາກພື້ນ ແລະ ສາກົນ. ພິເສດ, ສອງຝ່າຍຈະຊຸກຍູ້ສອງລັດຖະບານ ເພື່ອຍົກສູງການຮ່ວມມືທາງດ້ານເສດຖະກິດ, ການຄ້າ, ການທ່ອງທ່ຽວໃຫ້ເປັນຮູບປະທຳຫຼາຍຂຶ້ນ ເຊິ່ງລາວມີເງື່ອນໄຂທາງດ້ານຄົມມະນາຄົມ ເຊັ່ນ: ລົດໄຟຄວາມໄວສູງ ແລະ ອານາຄົດຈະຊຸກຍູ້ໃຫ້ມີຖ້ຽວບິນໂດຍກົງຮ່ວມກັນ ເພື່ອເປັນເງື່ອນໄຂໃນການຊຸກຍູ້ການຄ້າ, ການລົງທຶນ, ການທ່ອງທ່ຽວ ແລະ ອື່ນໆ.

ໃນໂອກາດມາຢ້ຽມຢາມ ແລະ ເຮັດວຽກໃນຄັ້ງນີ້, ຄະນະຜູ້ແທນ ຍັງໄດ້ເຂົ້າຢ້ຽມຂໍ່ານັບທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດລາວ ແລະ ທ່ານ ສອນໄຊ ສີພັນດອນ ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ, ພົບປະເຮັດວຽກກັບປະທານກຳມາທິການການຕ່າງປະເທດຂອງສະພາແຫ່ງຊາດລາວ, ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້, ລັດຖະມົນຕີກະຊວງສາທາລະນະສຸກ, ປະທານຄະນະກຳມະການຮ່ວມມືມົງໂກລີ-ລາວ. ນອກຈາກນີ້, ຄະນະຜູ້ແທນຍັງຈະໄດ້ເດີນທາງໄປເຄື່ອນໄຫວຢ້ຽມຢາມ ແລະ ເຮັດວຽກ ຢູ່ແຂວງຫຼວງນໍ້າທາ ເພື່ອສຶກສາ ແລະ ເກັບກຳຂໍ້ມູນກ່ຽວກັບນະໂຍບາຍເຊື່ອມໂຍງ ແລະ ເຊື່ອມຈອດ ກັບພາກພື້ນ ແລະ ສາກົນ ຂອງ ສປປລາວ ໂດຍຖືເອົາເສັ້ນທາງທາງລົດໄຟລາວ-ຈີນ ເປັນທ່າແຮງອັນສຳຄັນ ທີ່ ສປປລາວ ແລະ ມົງໂກລີ ຈະສືບຕໍ່ເພີ່ມທະວີການຮ່ວມມືກັນໃນຕໍ່ໜ້າ ແລະ ຢ້ຽມຢາມ ແລະ ເຮັດວຽກ ຢູ່ແຂວງຫຼວງພະບາງ ເພື່ອສຳຜັດກັບວັດທະນະທຳ, ຮີດຄອງປະເພນີ, ທຳມະຊາດທີ່ສວຍງາມ ແລະ ອຸດົມສົມບູນ ຂອງເມືອງມໍລະດົກໂລກ ຕື່ມອີກ.

## ຖະແຫຼງ...

(ຕໍ່ຈາກໜ້າ 1)

ການເມືອງສູນກາງພັກ, ປະທານຄະນະປະຈຳສະພາແຫ່ງຊາດ, ໂດຍມີບັນດາທ່ານຮອງປະທານຄະນະປະຈຳສະພາແຫ່ງຊາດ, ບັນດາທ່ານກຳມະການຄະນະປະຈຳສະພາແຫ່ງຊາດເຂົ້າຮ່ວມຢ່າງພ້ອມພຽງ ຈຳນວນ 15 ທ່ານ.

ຜ່ານການຄົ້ນຄວ້າພິຈາລະນາ, ປະກອບຄຳຄິດຄຳເຫັນຢ່າງເລິກເຊິ່ງຖີ່ຖ້ວນຂອງບັນດາທ່ານຄະນະປະຈຳສະພາແຫ່ງຊາດຕໍ່ຄຳສະເໜີຂອງນາຍົກລັດຖະມົນຕີ ກ່ຽວກັບການພິຈາລະນາຮັບຮອງເອົາການຍົກຍ້າຍ ແລະ ແຕ່ງຕັ້ງສະມາຊິກລັດຖະບານຢູ່ໃນກອງປະຊຸມຄະນະປະຈຳສະພາແຫ່ງຊາດປະຈຳເດືອນມັງກອນ 2023 ໃນວາລະຕອນເຊົ້າຂອງວັນທີ 30 ມັງກອນ 2023 ໄດ້ຕົກລົງດັ່ງນີ້:

ຕາງໜ້າຄະນະປະຈຳສະພາແຫ່ງຊາດ ມີຄວາມຍິນດີ ແລະ ຖືເປັນກຽດແຈ້ງມາຍັງບັນດາທ່ານສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນຂັ້ນແຂວງ, ພະນັກງານ, ທະຫານ, ຕຳຫຼວດ, ຊາວຜູ້ອອກແຮງງານ, ພໍ່ແມ່ພີ່ນ້ອງ, ປະຊາຊົນລາວບັນດາເຜົ່າໃນທົ່ວປະເທດ ແລະ ພີ່ນ້ອງຊາວລາວທີ່ອາໄສຢູ່ຕ່າງປະເທດຮັບຊາບ ກ່ຽວກັບຜົນສຳເລັດການພິຈາລະນາບັນຫາພື້ນຖານສຳຄັນຂອງປະເທດຊາດ ຄື:

I. ກອງປະຊຸມຂອງຄະນະປະຈຳສະພາແຫ່ງຊາດ ຊຸດທີ IX ປະຈຳເດືອນມັງກອນ 2023 ໄດ້ຕົກລົງເຫັນດີ ດັ່ງນີ້:

1) ຍົກຍ້າຍ ທ່ານ ວຽງສະຫວັດ ສີພັນດອນ ລັດຖະມົນຕີກະຊວງໂຍທາທິການ ແລະ ຂົນສົ່ງ ໄປຮັບໜ້າທີ່ໃໝ່ ຢູ່ແຂວງຫຼວງນໍ້າທາ;

2) ຍົກຍ້າຍ ທ່ານ ບຸນໂຈມ ອຸບົນປະເສີດ ລັດຖະມົນຕີກະຊວງການເງິນ ໄປຮັບໜ້າທີ່ໃໝ່ ຢູ່ແຂວງສະຫວັນນະເຂດ;

3) ຍົກຍ້າຍ ທ່ານ ດາວວົງ ພອນແກ້ວ ລັດຖະມົນຕີ ກະຊວງພະລັງງານ ແລະ ບໍ່ແຮ່ ໄປຮັບໜ້າທີ່ໃໝ່ ຢູ່ແຂວງສາລະວັນ;

4) ແຕ່ງຕັ້ງ ທ່ານ ສັນຕິພາບ ພົມວິຫານເຈົ້າແຂວງສະຫວັນນະເຂດ ມາຮັບໜ້າທີ່ໃໝ່ ເປັນລັດຖະມົນຕີກະຊວງການເງິນ;

5) ແຕ່ງຕັ້ງ ທ່ານ ໂພໄຊ ໄຊຍະສອນ ເຈົ້າແຂວງສາລະວັນ ມາຮັບໜ້າທີ່ໃໝ່ ເປັນລັດຖະມົນຕີ ກະຊວງພະລັງງານ ແລະ ບໍ່ແຮ່;

6) ແຕ່ງຕັ້ງ ທ່ານ ງາມປະສົງ ເມືອງມະນີ ເປັນລັດຖະມົນຕີ ກະຊວງໂຍທາທິການ ແລະ ຂົນສົ່ງ;

II. ຄຽງຄູ່ກັບການພິຈາລະນາ ແລະ ຮັບຮອງເອົາບັນຫາສຳຄັນພື້ນຖານຂອງປະເທດຊາດດັ່ງທີ່ກ່າວມາຂ້າງເທິງນັ້ນ, ໃນໄລຍະດຳເນີນກອງປະຊຸມນີ້ ຈະໄດ້ຄົ້ນຄວ້າພິຈາລະນາ ຮັບຟັງຜົນການຮຽບຮຽງກົດໝາຍ ຈຳນວນ 12 ສະບັບ ທີ່ໄດ້ຮັບຮອງເອົາໃນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດຊຸດທີ IX, ຮັບຟັງການລາຍງານສະພາບການປັບປຸງແຜນການສ້າງກົດໝາຍ ປີ 2023-2025, ຄົ້ນຄວ້າພິຈາລະນາບາງຄຳຮ້ອງຂໍຄວາມເປັນທຳ ແລະ ຄົ້ນຄວ້າພິຈາລະນາວຽກງານພາຍໃນສະພາແຫ່ງຊາດ ເຊັ່ນ: ພິຈາລະນາວຽກງານຂອງບັນດາກຳມາທິການ, ຄະນະເລຂາທິການ ແລະ ສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ.

ອີກເທື່ອໜຶ່ງ ຕາງໜ້າຄະນະປະຈຳສະພາແຫ່ງຊາດ, ຂໍຂອບໃຈມາຍັງບັນດາທ່ານສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນຂັ້ນແຂວງ, ພະນັກງານ, ທະຫານ, ຕຳຫຼວດ, ຊາວຜູ້ອອກແຮງງານ, ພໍ່ແມ່ພີ່ນ້ອງ, ປະຊາຊົນລາວບັນດາເຜົ່າທຸກຊັ້ນຄົນ ໃນທົ່ວປະເທດ ແລະ ພີ່ນ້ອງຊາວລາວທີ່ອາໄສຢູ່ຕ່າງປະເທດ ທີ່ໄດ້ຕິດຕາມການຖະແຫຼງຂ່າວການດຳເນີນກອງປະຊຸມສະໄໝສາມັນຂອງຄະນະປະຈຳຂອງສະພາແຫ່ງຊາດ ຊຸດທີ IX ປະຈຳເດືອນມັງກອນ 2023 ໃນຄັ້ງນີ້.

ຂໍສະແດງຄວາມຂອບໃຈ ແລະ ຊົມເຊີຍຢ່າງຈິງໃຈມາຍັງພາກສ່ວນສື່ມວນຊົນທຸກສຳນັກຂ່າວ ລວມທັງໂທລະພາບແຫ່ງຊາດ, ວິທະຍຸກະຈາຍສຽງແຫ່ງຊາດ ແລະ ສື່ສິ່ງພິມປະເພດຕ່າງໆ ທີ່ໄດ້ຕິດຕາມຂ່າວຢ່າງໃກ້ຊິດ ເພື່ອເກັບກຳຂ່າວ ແລະ ເຜີຍແຜ່ຢ່າງທັນການ ກ່ຽວກັບການດຳເນີນກອງປະຊຸມໃນຄັ້ງນີ້ ໃຫ້ແກ່ສັງຄົມໄດ້ຮັບຊາບຢ່າງທົ່ວເຖິງ.

## ກຳມາທິການ...

(ຕໍ່ຈາກໜ້າ 1)

ການຍຸຕິທຳ ແລະ ປກຊ-ປກສ ສະພາປະຊາຊົນຂັ້ນແຂວງ ຊຸດທີ II ປະຈຳປີ 2022, ໃນວັນທີ 26 ມັງກອນ 2022 ທີ່ສະພາແຫ່ງຊາດ ໂດຍການເປັນປະທານຂອງທ່ານ ພົຕ. ປອ. ວົງສັກ ພັນທະວົງ ປະທານກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ມີບັນດາທ່ານຕາງໜ້າຈາກຄະນະກຳມະການຂອງກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ແຂກຖືກເຊີນ, ທ່ານນັກວິທະຍາກອນມາຈາກກຳມາທິການຍຸຕິທຳ, ກົດໝາຍ ແລະ ກົມເລຂານຸການ ຄະນະເລຂາທິການສະພາແຫ່ງຊາດ ເຂົ້າຮ່ວມ.

ກອງປະຊຸມສ້າງຄວາມເຂັ້ມແຂງໃຫ້ພະນັກງານຂັ້ນວິຊາການຂົງເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໃນຄັ້ງນີ້ ບັນດານັກສຳມະນາກອນໄດ້ຮັບຟັງພາລະບົດບາດ ວ່າດ້ວຍການຮັບ ແລະ ການພິຈາລະນາຄຳຮ້ອງຂໍຄວາມເປັນທຳຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ ແລະ ຄະນະປະຈຳສະພາແຫ່ງຊາດ; ການຮ່າງ ແລະ ການຈໍລະຈອນເອກະສານທາງລັດຖະການ ຂອງສະພາແຫ່ງຊາດ; ຍົກສູງຄວາມຮູ້ ແລະ ວິທີການສ້າງ ແລະ ປັບປຸງກົດໝາຍ, ນິຕິກຳໃຕ້ກົດໝາຍ; ພາລະບົດບາດ ການຕິດຕາມກວດກາຂອງກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຕໍ່ກຳລັງປະກອບອາວຸດ; ພາລະບົດບາດ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ສະພາແຫ່ງຊາດ ແລະ ຂໍ້ຕົກລົງຮ່ວມ ຄະນະປະສານງານລະຫວ່າງກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ກະຊວງປ້ອງກັນປະເທດ, ກະຊວງປ້ອງກັນຄວາມສະຫງົບ ແລະ ສະຫະພັນນັກຮົບເກົ່າ.

ທ່ານ ພົຕ. ປອ. ວົງສັກ ພັນທະວົງ ໄດ້ຮຽກຮ້ອງມາຍັງນັກວິທະຍາກອນ ຈົ່ງເອົາໃຈໃສ່ຢ່າງປະດິດ ເພື່ອຖ່າຍທອດຄວາມຮູ້ໃຫ້ນັກສຳມະນາກອນ ກໍຄືພະນັກງານຂັ້ນວິຊາການຂົງເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ນັບທັງຢູ່ຂັ້ນສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ທີ່ມາເຝິກອົບຮົມຄັ້ງນີ້ ກໍາໄດ້ບົດຮຽນຕ່າງໆ ແລະ ຮຽກຮ້ອງມາຍັງນັກສຳມະນາກອນ ຈົ່ງເອົາໃຈໃສ່ຟັງການບັນລະຍາຍເນື້ອໃນເອກະສານໃຫ້ດີ ອັນໃດບໍ່ທັນເຂົ້າໃຈຈົ່ງກ້າຫານຖາມຄືນ ແລະ ປະກອບຄຳເຫັນດ້ວຍຄວາມສ້າງສັນ, ຫວັງວ່າບັນດາສະຫາຍຈະເຊີດຊູຄວາມຮັບຜິດຊອບການເມືອງຂອງຕົນ ເຂົ້າໃນການ ຄົ້ນຄວ້າ, ປະກອບຄຳເຫັນຕໍ່ທຸກບັນຫາຢ່າງຖີ່ຖ້ວນ, ພາວະວິໄສ ແລະ ເລິກເຊິ່ງ ເພື່ອເຮັດໃຫ້ກອງປະຊຸມສ້າງຄວາມເຂັ້ມແຂງ ໃນຄັ້ງນີ້ບັນລຸຕາມຈຸດປະສົງ ແລະ ລະດັບຄາດໝາຍທີ່ວາງໄວ້.



## ກຳມາທິການບັນດາເຜົ່າ...

(ຕໍ່ຈາກໜ້າ 1)

ປະຊາ ຮອງປະທານສູນລວມຄຣິສຕະຈັກຂ່າວປະເສີດ ສປປລາວ ມີບັນດາທ່ານຄະນະຜູ້ແທນທັງສອງຝ່າຍເຂົ້າຮ່ວມເປັນສັກຂີພິຍານ.

ເຄື່ອງທີ່ນຳມາມອບໃນຄັ້ງນີ້ ປະກອບມີ: ຜ້າຫົ່ມ ແລະ ເຄື່ອງນຸ່ງກັນໜາວ ຈຳນວນ 160 ຊຸດ ລວມມູນຄ່າເຄື່ອງ ແລະ ການຂົນສົ່ງເປັນຈຳນວນເງິນ 11 ລ້ານກີບ.

ທັງນີ້, ເຄື່ອງອຸປະກອນດັ່ງກ່າວແມ່ນຈະນຳໄປຊ່ວຍເຫຼືອແຈກຢາຍໃນເວລາທີ່ຄະນະຜູ້ແທນສະມາຊິກສະພາແຫ່ງຊາດ ເຄື່ອນໄຫວພົບຜູ້ມີສິດເລືອກຕັ້ງຢູ່ເຂດທຸລະກັນດານ ແລະ ຂາດເຂີນ.

(ສອນສັກ ວັນວິໄຊ)

# ກອງປະຊຸມປະຈໍາປີ 2022 ຂອງຄະນະເລຂາທິການສະພາປະຊາຊົນແຂວງອຸດົມໄຊ



(ສພຊ) ຕອນບ່າຍວັນພະຫັດທີ 19 ມັງກອນ 2023 ຄະນະເລຂາທິການສະພາປະຊາຊົນແຂວງອຸດົມໄຊ ໄດ້ເປີດກອງປະຊຸມວຽກງານປະຈໍາປີ 2022 ແລະ ທິດທາງແຜນການ ປີ 2023 ຢູ່ທີ່ຫ້ອງປະຊຸມຂອງສະພາປະຊາຊົນແຂວງ ໂດຍການເປັນປະທານຂອງທ່ານ ນາງ ວັນສີ ພວງມະໄລ ກໍາມະການປະຈໍາສະພາປະຊາຊົນແຂວງ, ເລຂາທິການສະພາປະຊາຊົນແຂວງ; ເຂົ້າຮ່ວມໂດຍທ່ານ ນາງ ຄໍາພອນ ພົມມະຈັນ ຮອງປະທານສະພາປະຊາຊົນແຂວງ ຜູ້ຊີ້ນໍາວຽກງານຄະນະເລຂາທິການ, ມີບັນດາທ່ານຄະນະເລຂາທິການ, ຫົວໜ້າ-ຮອງຫົວໜ້າຂະແໜງ ແລະ ພະນັກງານວິຊາການພາຍໃນສະພາປະຊາຊົນແຂວງເຂົ້າຮ່ວມຢ່າງພ້ອມພຽງ.

ໃນກອງປະຊຸມ, ທ່ານ ນາງ ວຽງສະໄໝ ປັນຍາຂັນ ຮອງເລຂາທິການສະພາປະຊາຊົນແຂວງ ໄດ້ຂຶ້ນຜ່ານບົດສະຫຼຸບການເຄື່ອນໄຫວວຽກງານຂອງຄະນະເລຂາທິການສະພາປະຊາຊົນແຂວງອຸດົມໄຊ ປະຈໍາປີ 2022 ແລະ ທິດທາງແຜນການ ປະຈໍາປີ 2023 ເຊິ່ງໃນໄລຍະໜຶ່ງປີຜ່ານມາ ຄະນະເລຂາທິການສະພາປະຊາຊົນແຂວງ ໄດ້ເອົາໃຈໃສ່ສຶກສາອົບຮົມການເມືອງ-ແນວຄິດໃຫ້ພະນັກງານ-ລັດຖະກອນພາຍໃນຄະນະເລຂາທິການຢ່າງຕໍ່ເນື່ອງ ແລະ ເປັນປົກກະຕິ, ເຮັດໃຫ້ພະນັກງານ-ລັດຖະກອນ ມີແນວຄິດອຸ່ນອຽນ ທຸ່ນທ່ຽງ ເຊື່ອໝັ້ນຕໍ່ການນໍາພາຂອງພັກ-ລັດໃນໄລຍະໃໝ່, ເຄົາລົບລັດຖະທໍາມະນູນ ແລະ ກົດໝາຍ, ມີຄຸນສົມບັດສິນທໍາປະຕິວັດ, ມີຄວາມຮັບຜິດຊອບສູງ ຕໍ່ໜ້າທີ່ວິຊາສະເພາະຂອງຕົນ, ເອົາໃຈໃສ່ຄົ້ນຄວ້າສຶກສາຮໍ່າຮຽນ, ຮັດແໜ້ນຄວາມສາມັກຄີພາຍໃນ ແລະ ພາຍນອກ.

ຄະນະເລຂາທິການສະພາປະຊາຊົນແຂວງອຸດົມໄຊມີ 3 ຂະແໜງການຂຶ້ນກັບຄື: ຂະແໜງຄົ້ນຄວ້າສັງລວມ-ຂໍ້ມູນຂ່າວສານ, ຂະແໜງຈັດຕັ້ງ-ກວດກາ ແລະ ຂະແໜງບໍລິຫານ-ການເງິນ,

ອ່ານຕໍ່ໜ້າ 6

# ຮ່ວມໃຈບໍລິຈາກເລືອດ ໂດຍບໍ່ຮຽກຮ້ອງສິ່ງຕອບແທນ



(ສພຊ) ຕອນເຊົ້າຂອງວັນທີ 11 ມັງກອນ 2023 ສະພາປະຊາຊົນແຂວງຫຼວງນໍ້າທາ ໄດ້ຈັດກິດຈະກໍາຮ່ວມໃຈກັນບໍລິຈາກເລືອດໂດຍບໍ່ຮຽກຮ້ອງສິ່ງຕອບແທນ ທີ່ຫ້ອງປະຊຸມຂອງສະພາປະຊາຊົນແຂວງຫຼວງນໍ້າທາ ໂດຍການເປັນປະທານຂອງທ່ານ ບຸນຄົງ ພວງມະນີ ຮອງເລຂາທິການສະພາປະຊາຊົນແຂວງ, ມີຫົວໜ້າ-ຮອງຫົວໜ້າຂະແໜງ ແລະ ພະນັກງານວິຊາການພາຍໃນສະພາປະຊາຊົນແຂວງ ເຂົ້າຮ່ວມຢ່າງພ້ອມພຽງ.

ໃນພິທີ, ຜູ້ຕາງໜ້າຈາກອົງການກາແດງ ປະຈໍາແຂວງຫຼວງນໍ້າທາ ໄດ້ຂຶ້ນກ່າວຈຸດປະສົງໃນການຈັດກິດຈະກໍາຄັ້ງນີ້ ພ້ອມທັງໂຄສະນາປຸກລະດົມຈິດໃຈພະນັກງານ-ລັດຖະກອນທີ່ເຂົ້າຮ່ວມກິດຈະກໍາຄັ້ງນີ້ ຈົ່ງພ້ອມໃຈກັນບໍລິຈາກເລືອດເພື່ອເປັນການຊ່ວຍເຫຼືອສັງຄົມ, ຜ່ານມາດຖານເງື່ອນໄຂຂອງຜູ້ທີ່ຈະບໍລິຈາກເລືອດ ແລະ ສິດທີ່ຜູ້ບໍລິຈາກເລືອດທີ່ຈະໄດ້ຮັບ ທັງນີ້, ສູນບໍລິຈາກເລືອດກໍໄດ້ຖືເອົາວຽກງານການປຸກລະດົມບໍລິຈາກເລືອດແບບສະໝັກໃຈ ບໍ່ຮຽກຮ້ອງສິ່ງຕອບແທນ ເປັນບູລິມະສິດສໍາຄັນອັນໜຶ່ງ ໂດຍມີການຈັດຕັ້ງເຄື່ອນໄຫວຂົນຂວາຍຜູ້ບໍລິຈາກເລືອດດ້ວຍຫຼາຍຮູບການ ແລະ ຈັດຕັ້ງເຄື່ອນໄຫວຮັບບໍລິຈາກເລືອດຮ່ວມກັບການຈັດຕັ້ງ ແລະ ຊຸມຊົນຕ່າງໆຈໍານວນໜຶ່ງ ແຕ່ເລືອດທີ່ໄດ້ມານັ້ນຍັງບໍ່ພຽງພໍ ສາເຫດຕົ້ນຕໍກໍຍ້ອນວ່າຈໍານວນຜູ້ບໍລິຈາກເລືອດ ຍັງມີຈໍາກັດ, ຫຼາຍຄົນຍັງຢ້ານຕໍ່ການບໍລິຈາກເລືອດ ແລະ ອື່ນໆ.

ໃນໂອກາດດັ່ງກ່າວ, ທ່ານ ບຸນຄົງ ພວງມະນີ ໄດ້ຍົກໃຫ້ເຫັນເຖິງບົດບາດຄວາມສໍາຄັນຂອງການບໍລິຈາກເລືອດເຊິ່ງເປັນການເສຍສະຫຼະຊ່ວຍເຫຼືອສັງຄົມມະນຸດດ້ວຍກັນທີ່ຍັງລໍຄອຍການຊ່ວຍເຫຼືອ ທັງຊຸກຍູ້, ປຸກລະດົມ ພະນັກງານ-ລັດຖະກອນໃຫ້ພ້ອມໃຈກັນບໍລິຈາກເລືອດເພື່ອຊ່ວຍເຫຼືອສັງຄົມ.

ກິດຈະກໍາບໍລິຈາກເລືອດໃນຄັ້ງນີ້ ມີຜູ້ບໍລິຈາກເລືອດຈໍານວນ 4 ທ່ານ, ໄດ້ຮັບເລືອດທັງໝົດ 4 ຖົງ ແລະ ເລືອດທີ່ໄດ້ຮັບຈາກການບໍລິຈາກໃນຄັ້ງນີ້ ແມ່ນຈະນໍາໄປຊ່ວຍເຫຼືອຄົນເຈັບທີ່ຕ້ອງການເລືອດ ເພື່ອໃຫ້ເກີດປະໂຫຍດສູງສຸດຕໍ່ສັງຄົມ.

ການບໍລິຈາກເລືອດເປັນສິ່ງທີ່ປະເສີດ, ການບໍລິຈາກເລືອດ ແມ່ນການສ້າງບຸນກຸສົນອັນຍິ່ງໃຫຍ່ ເພາະວ່າຊ່ວຍກອບກູ້ເອົາຊີວິດຂອງຄົນຜູ້ທີ່ກໍາລັງຈະສິ້ນຫວັງໃຫ້ມີຊີວິດກັບຄືນມາ.

(ນາງ ອໍາພອນ ສີປະເສີດ)

# ສພຂ ຫົວພັນ ລະດົມເຄື່ອງຊ່ວຍເຫຼືອປະຊາຊົນໄດ້ຫຼາຍກວ່າ 126 ລ້ານກີບ



ໃນວາລະດໍາເນີນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ທ່ານ ຄອນປະພັນ ເລືອງສີຈັນທອງ ສະມາຊິກສະພາແຫ່ງຊາດ (ສສຊ) ປະຈໍາເຂດເລືອກຕັ້ງທີ 8 ແຂວງຫົວພັນ, ຮອງປະທານສະພາປະຊາຊົນແຂວງ (ສພຂ) ຫົວພັນ ໄດ້ໃຫ້ສໍາພາດຕໍ່ສື່ມວນຊົນວ່າ: ນັບແຕ່ກອງປະຊຸມສະໄໝສາມັນເທື່ອທີ 3-4 ຂອງ ສພຊ ຊຸດທີ IX ຄະນະ ສສຊ ແຂວງຫົວພັນ ໄດ້ເອົາໃຈໃສ່ໃນການຈັດຕັ້ງປະຕິບັດຕາມ 3 ພາລະບົດບາດ ສາມາດຍາດໄດ້ຜົນສໍາເລັດ ຄື:

**ດ້ານນິຕິບັນຍັດ:** ເຂົ້າຮ່ວມທາບທາມປະກອບຄໍາເຫັນໃສ່ບັນດາຮ່າງກົດໝາຍທີ່ ສພຊ ໄດ້ຮັບຮອງ ຢູ່ໃນກອງປະຊຸມສະໄໝສາມັນແຕ່ລະຄັ້ງ; ນອກນັ້ນ, ຍັງໄດ້ເຂົ້າຮ່ວມທາບທາມ ແລະ ປະກອບຄໍາເຫັນໃສ່ບັນດາຮ່າງກົດໝາຍຕ່າງໆໄດ້ທັງໝົດ 25 ສະບັບ ແລະ ຍັງໄດ້ຮ່ວມກັບຄະນະປະຈໍາສະພາປະຊາຊົນແຂວງ ຊຸກຍູ້ພາກສ່ວນກ່ຽວຂ້ອງຂອງແຂວງ ສ້າງນິຕິກໍາໃຕ້ກົດໝາຍທີ່ຕິດພັນກັບແຜນພັດທະນາເສດຖະກິດ-ສັງຄົມ ຢູ່ຂັ້ນແຂວງ ໄດ້ຈໍານວນ 2 ສະບັບ ຄື: ຂໍ້ຕົກລົງເຈົ້າແຂວງວ່າດ້ວຍການປະເມີນລາຄາທີ່ດິນ ຢູ່ແຂວງຫົວພັນ ແລະ ຂໍ້ຕົກລົງເຈົ້າແຂວງວ່າດ້ວຍນະໂຍບາຍສົ່ງເສີມການລົງທຶນສະເພາະກິດຈະກໍາການປູກການລ້ຽງເປັນສິນຄ້າ ຢູ່ແຂວງຫົວພັນ; ເຂົ້າຮ່ວມເປັນຄະນະໃນການສ້າງນິຕິກໍາວ່າດ້ວຍການຄຸ້ມຄອງແກ້ໄຂໄພພິບັດຂັ້ນແຂວງ ແລະ ຄະນະການປັບປຸງຂໍ້ຕົກລົງວ່າດ້ວຍກອງທຶນກິລາກາຍະກໍາ; ໄດ້ຈັດກອງປະຊຸມປະເມີນການຈັດຕັ້ງປະຕິບັດ 4 ກົດໝາຍ ຄື: ກົດໝາຍວ່າດ້ວຍທີ່ດິນ, ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ກົດໝາຍວ່າດ້ວຍຊັບສິນຂອງລັດ ແລະ ກົດໝາຍວ່າດ້ວຍແຮ່ທາດ; ເອົາໃຈໃສ່ປະສານສົມທົບກັບພາກສ່ວນກ່ຽວຂ້ອງໃນການໂຄສະນາເຜີຍແຜ່ກົດໝາຍ, ນິຕິກໍາຕ່າງໆ ແລະ 2 ວາລະແຫ່ງຊາດ ໂດຍຕິດພັນກັບການລົງໂຄສະນາເຜີຍແຜ່ຜົນສໍາເລັດກອງປະຊຸມສະໄໝສາມັນແຕ່ລະຄັ້ງ.

**ດ້ານການຕົກລົງບັນຫາສໍາຄັນຂອງຊາດ ແລະ ຂອງທ້ອງຖິ່ນ:** ສະມາຊິກສະພາປະຊາຊົນແຂວງໄດ້ປະຕິບັດພາລະບົດບາດໃນການເປັນຕົວແທນຂອງປະຊາຊົນບັນດາເຜົ່າ, ໃນການຄົ້ນຄວ້າ, ປະກອບຄໍາເຫັນ ພ້ອມທັງພິຈາລະນາຮັບຮອງເອົາບັນຫາສໍາຄັນຕ່າງໆຂອງແຂວງດ້ວຍຄວາມຮັບຜິດຊອບສູງ ເປັນຕົ້ນແມ່ນພິຈາລະນາຮັບຮອງເອົາການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ 6 ເດືອນຕົ້ນປີ 2022, ແລະ ທິດທາງແຜນການ 6 ເດືອນທ້າຍປີ; ພິຈາລະນາຮັບຮອງເອົາການຈັດຕັ້ງປະຕິບັດສອງວາລະແຫ່ງຊາດວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ແລະ ບັນຫາຢາເສບຕິດ ໃນໄລຍະຜ່ານມາ ແລະ ທິດທາງແຜນການວຽກຈຸດສຸມ 6 ເດືອນທ້າຍປີ 2022; ພິຈາລະນາຮັບຮອງເອົາການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ 6 ເດືອນຕົ້ນປີ 2022 ແລະ ທິດທາງແຜນການ 6 ເດືອນທ້າຍປີ 2022 ຂອງ ສພຂ; ມະຕິກອງປະຊຸມ ສພຂ ຫົວພັນ ວ່າດ້ວຍການຮັບຮອງເອົາການປະເມີນລາຄາທີ່ດິນຢູ່ແຂວງຫົວພັນ; ມະຕິກອງປະຊຸມ ສພຂ ຫົວພັນ ວ່າດ້ວຍການຮັບຮອງເອົາ ນະໂຍບາຍການສົ່ງເສີມການລົງທຶນກິດຈະກໍາການປູກ-ການລ້ຽງເປັນສິນຄ້າຢູ່ແຂວງຫົວພັນ.

**ດ້ານຕິດຕາມກວດກາ:** ຮ່ວມກັບສະພາແຫ່ງຊາດ, ຄະນະປະຈໍາສະພາປະຊາຊົນແຂວງ ແລະ ພະແນກການ ກ່ຽວຂ້ອງຂອງແຂວງລົງຕິດຕາມຊຸກຍູ້ການຈັດຕັ້ງປະຕິບັດ ບັນດາຄາດໝາຍ ເປັນຕົ້ນແມ່ນບັນດາໂຄງການຕ່າງໆທີ່ມາຂຸດຄົ້ນແຮ່ ຢູ່ແຂວງຫົວພັນ, ໂຄງການກໍ່ສ້າງສະໜາມບິນໜອງຄ້າງ, ໂຄງການກໍ່ສ້າງເສັ້ນທາງ, ໂຄງການກໍ່ສ້າງຂົວຂ້າມນໍ້າມ່າ, ຕິດຕາມກວດກາຜົນກະທົບຈາກໂຄງການສ້າງເຂື່ອນໄຟຟ້ານໍ້າຊໍາ 1 ແລະ ນໍ້າຊໍາ 3 ຢູ່ເມືອງຊໍາໃຕ້ ແລະ ເມືອງອື່ນໆຂອງແຂວງຫົວພັນ. ພ້ອມນັ້ນ, ຍັງໄດ້ປຸກລະດົມສຶກສາອົບຮົມການເມືອງແນວຄິດໃຫ້ປະຊາຊົນທີ່ໄດ້ຮັບຜົນກະທົບຈາກໂຄງການດັ່ງກ່າວໄດ້ຮັບຮູ້ເຂົ້າໃຈຕໍ່ແນວທາງນະໂຍບາຍຂອງພັກ,ລະບຽບກົດໝາຍຂອງລັດ.

ທ່ານໃຫ້ຮູ້ຕື່ມວ່າ: ຜ່ານການລົງພົບປະຜູ້ມີສິດເລືອກຕັ້ງ ແລະ ຕິດຕາມກວດກາ ຍັງເຫັນວ່າມີບັນຫາທີ່ປະຊາຊົນສະເໜີຫຼາຍ ແລະ ເປັນບັນຫາຄົງຄ້າງຍັງບໍ່ສາມາດແກ້ໄຂໄດ້ ເຊິ່ງ ຄະນະ ສສຊ ປະຈໍາເຂດເລືອກຕັ້ງທີ 8 ແຂວງຫົວພັນ ເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງ ແລະ ຕິດຕາມກວດກາໂດຍຕິດພັນກັບການລົງເຜີຍແຜ່ຜົນສໍາເລັດກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງ ຢູ່ບັນດາເມືອງ, ປະຊາຊົນມີຄໍາສະເໜີຕໍ່ ສສຊ ເປັນຕົ້ນແມ່ນຂໍທຶນກໍ່ສ້າງ ແລະ ສ້ອມແປງເສັ້ນທາງ, ການປະຕິບັດນະໂຍບາຍຕໍ່ຜູ້ມີຜົນງານ ແລະ ຄຸນງາມຄວາມດີຕໍ່ການປະຕິວັດຊາດໃນໄລຍະຜ່ານມາ ຍັງຊັກຊ້າ, ບັນຫາຜົນກະທົບຈາກການກໍ່ສ້າງເຂື່ອນໄຟຟ້ານໍ້າຊໍາ ໄດ້ສົ່ງຜົນກະທົບຕໍ່ທີ່ຢູ່ອາໄສ ແລະ ບ່ອນທໍາການຜະລິດຂອງປະຊາຊົນ, ບັນຫາການເຊົ່າ, ສໍາປະທານທີ່ດິນ ແລະ ການຊົດເຊີຍຜົນເສຍຫາຍໃຫ້ປະຊາຊົນ ຍັງຊັກຊ້າ ແລະ ການແກ້ໄຂຄວາມທຸກຍາກຕໍ່ເຂດຊົນນະບົດເຂດຫ່າງໄກສອກຫຼີກ, ບັນຫາການແກ້ໄຂຢາເສບຕິດ ແລະ ບັນຫາປາກົດການຫຍໍ້ທໍ້ອື່ນໆ; ການລົງພົບປະຜູ້ມີສິດເລືອກຕັ້ງ ນໍາເອົາຜົນສໍາເລັດກອງປະຊຸມສະໄໝສາມັນເທື່ອທີ 3, ຂອງ ສພຊ ຊຸດທີ IX ແລະ ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຂ ຫົວພັນ ຊຸດທີ II ໄດ້ເຄື່ອນໄຫວເຜີຍແຜ່ໃນ 10 ເມືອງ 47 ຈຸດ, ກວມເອົາ 56 ບ້ານ, ມີຜູ້ເຂົ້າຮ່ວມທັງໝົດ 3.958 ຄົນ ຍິງ 1.795 ຄົນ ແລະ ຍັງໄດ້ລະດົມເຄື່ອງຊ່ວຍເຫຼືອ ມອບໃຫ້ອົງການປົກຄອງບ້ານ, ປະຊາຊົນຜູ້ທຸກຍາກ ແລະ ຄອບຄົວທີ່ຖືກຜົນກະທົບຈາກອັກຄີໄພ ເປັນຕົ້ນແມ່ນເຄື່ອງນຸ່ງຫົ່ມ, ໂຫລະໂຄ່ງ, ຕູ້ລໍາໂພງ, ເຄື່ອງກິລາ ແລະ ອຸປະກອນການຮຽນ ລວມເປັນມູນຄ່າທັງໝົດ 126.805.000 ກີບ.

# ກອງປະຊຸມຄົບຄະນະຂອງ 2 ຄະນະກຳມະການ ສພຂ ໄຊຍະບູລີ



(ສພຊ) ໃນລະຫວ່າງວັນທີ 18-19 ມັງກອນ 2023 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງໄຊຍະບູລີ ໄດ້ມີກອງປະຊຸມຄົບຄະນະຂອງ 2 ຄະນະກຳມະການ ສະພາປະຊາຊົນແຂວງ (ສພຂ) ໄຊຍະບູລີ ປະຈຳປີ 2022 ຄື: ກອງປະຊຸມຄົບຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ (ຄວສຜ) ປະຈຳປີ 2022 ໂດຍການເປັນປະທານຂອງທ່ານ ບຸນໄທ ສີເທບ ປະທານ ຄະນະກຳມະການ ດັ່ງກ່າວ; ເຂົ້າຮ່ວມໂດຍທ່ານ ນາງ ວິລະພອນ ທອງພິມ ຮອງປະທານ ສພຂ, ມີສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງ, ສະມາຊິກສະພາປະຊາຊົນແຂວງ (ສສຂ), ຫົວໜ້າ-ຮອງຫົວໜ້າພະແນກການ, ອົງການ, ກົມກອງ, ຮອງເຈົ້າເມືອງ 11 ເມືອງ, ຫົວໜ້າ, ຮອງຫົວໜ້າຫ້ອງການຕະຫຼອດຮອດພະນັກງານຫຼັກແຫຼ່ງເຂົ້າຮ່ວມຮູບແບບເຊີ່ງໜ້າ ແລະ ວິດີໂອທາງໄກ ແລະ ກອງປະຊຸມຄົບຄະນະຂອງຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ (ຄຍປປ) ປະຈຳປີ 2022 ເປັນປະທານໂດຍທ່ານ ສົມມະນາ ປິ່ນທິບ ປະທານ ຄຍປປ; ເຂົ້າຮ່ວມມີຮອງປະທານ ຄຍປປ, ສສຂ, ຫົວໜ້າ-ຮອງຫົວໜ້າພະແນກການ-ອົງການໄອຍະການປະຊາຊົນແຂວງ, ສານປະຊາຊົນແຂວງ, ກອງບັນຊາການ ປກສ ແຂວງ, ຮອງເຈົ້າເມືອງ 11 ເມືອງ ພ້ອມດ້ວຍພະນັກງານຫຼັກແຫຼ່ງພາຍໃນຄະນະກຳມະການດັ່ງກ່າວ ເຂົ້າຮ່ວມຢ່າງພ້ອມພຽງ.

ໃນວາລະກອງປະຊຸມ ຜູ້ເຂົ້າຮ່ວມໄດ້ຮັບຟັງຮ່າງບົດສະຫຼຸບການເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ທິດທາງແຜນການເຄື່ອນໄຫວ ປະຈຳປີ 2023 ຄວສຜ ເຊິ່ງແມ່ນກົງຈັກການຈັດຕັ້ງໜຶ່ງຂອງສະພາປະຊາຊົນແຂວງ ມີພາລະບົດບາດເປັນເລຂາທິການໃຫ້ແກ່ກຳມາທິການວັດທະນະທຳ-ສັງຄົມ ແລະ ກຳມາທິການບັນດາເຜົ່າ ສະພາແຫ່ງຊາດ ແລະ ສພຂ ກໍຄືຄະນະປະຈຳ ສພຂ ໃນການຈັດຕັ້ງປະຕິບັດວຽກງານຕາມຂອບເຂດ ສິດ ແລະ ໜ້າທີ່ຂອງຕົນ ເປັນຕົ້ນແມ່ນການຄົ້ນຄວ້າປະກອບຄຳເຫັນຕໍ່ການສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍ ຄົ້ນຄວ້າ ແລະ ສະເໜີບັນຫາສຳຄັນຂອງແຂວງ, ຂອງເມືອງ ກົງຈັກການຈັດຕັ້ງຂອງ ຄວສຜ ປະກອບມີ 2 ຂະແໜງຄື: ຂະແໜງວັດທະນະທຳ-ສັງຄົມ ແລະ ຂະແໜງບັນດາເຜົ່າ.

ກອງປະຊຸມຍັງໄດ້ຍົກໃຫ້ເຫັນດ້ານດີ, ດ້ານອ່ອນ, ຂໍ້ຄົງຄ້າງບົດຮຽນທີ່ຖອດຖອນໄດ້ ພ້ອມທັງວາງທິດທາງການເຄື່ອນໄຫວ ປະຈຳປີ 2023 ເພື່ອດຳເນີນຊີວິດການເມືອງປະຈຳປີຂອງຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ເປັນການຕີລາຄາຄືນຜົນສຳເລັດດ້ານດີ, ດ້ານອ່ອນ, ຂໍ້ຄົງຄ້າງ ແຫ່ງການຈັດຕັ້ງປະຕິບັດມະຕິກອງປະຊຸມຄົບຄະນະປະຈຳປີ 2021 ຂອງຕົນ ແລະ ວາງທິດທາງແຜນການເຄື່ອນໄຫວປີ 2023 ໃຫ້ສອດຄ່ອງກັບໜ້າທີ່ການເມືອງ ພ້ອມດຽວກັນນີ້ກອງປະຊຸມຍັງໄດ້ຜ່ານຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາປະຊາຊົນແຂວງ ຊຸດທີ 2 ໃນໄລຍະ 1 ປີ ຜ່ານມາ ກະກຽມໃຫ້ແກ່ການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສພຂ ຊຸດທີ II ທີ່ຈະໄຂຂຶ້ນໃນຕໍ່ໜ້ານີ້.

ກອງປະຊຸມຍັງໄດ້ຮັບຟັງການໂອ້ລົມຈາກທ່ານ ນາງ ວິລະພອນ ທອງພິມ ເຊິ່ງທ່ານໄດ້ສະແດງຄວາມຍ້ອງຍໍຊົມເຊີຍບັນດາຜູ້ແທນກອງປະຊຸມທີ່ໄດ້ຍົກສູງຄວາມຮັບຜິດຊອບການເມືອງຂອງຕົນ, ເຂົ້າໃນການຄົ້ນຄວ້າປະກອບຄຳຄິດຄຳເຫັນໃສ່ບົດລາຍງານຂອງພາກສ່ວນກ່ຽວຂ້ອງຢ່າງສ້າງສັນ ແລະ ກົງໄປກົງມາ. ຄຽງຄູ່ກັນນັ້ນ ກໍຕ້ອງເອົາໃຈໃສ່ເພີ່ມທະວີການພົວພັນປະສານງານໃຫ້ກົມກຽວລະຫວ່າງ ຄວສຜ ກັບພາກສ່ວນກ່ຽວຂ້ອງ; ສືບຕໍ່ປັບປຸງແບບແຜນວິທີເຮັດວຽກຂອງຕົນໃຫ້ມີຄຸນນະພາບອັນໃໝ່ ບົນພື້ນຖານການປັບປຸງກົງຈັກໃໝ່ ແລະ ຮຽກຮ້ອງໃຫ້ຂະແໜງການກ່ຽວຂ້ອງ ຈົ່ງສືບຕໍ່ເອົາໃຈໃສ່ສູ້ຊົນຈັດຕັ້ງປະຕິບັດບັນດາຄາດໝາຍທີ່ຍັງບໍ່ບັນລຸ.

ກອງປະຊຸມ ຄຍປປ, ໄດ້ຮັບຟັງລາຍງານການເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ທິດທາງແຜນການ ປີ 2023 ຂອງອົງການໄອຍະການ; ຮັບຟັງລາຍງານການເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ທິດທາງແຜນການ ປີ 2023 ຂອງສານປະຊາຊົນແຂວງ; ພ້ອມນັ້ນ, ຜູ້ເຂົ້າຮ່ວມໄດ້ພ້ອມກັນຄົ້ນຄວ້າປະກອບຄຳຄິດຄຳເຫັນໃສ່ບົດລາຍງານຂອງພາກສ່ວນກ່ຽວຂ້ອງ ໂດຍສະເພາະແມ່ນບັນຫາການແກ້ໄຂຂໍ້ຄົງຄ້າງ ທີ່ເຫັນວ່າຍັງມີຕົວເລກເພີ່ມຂຶ້ນເລື້ອຍໆ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດຕໍ່ໜ້າ ທັງໄດ້ຮັບຟັງການຊີ້ແຈງຈາກພາກສ່ວນທີ່ກ່ຽວຂ້ອງ ຕາມຄຳສະເໜີຂອງປະຊາຊົນ ແລະ ຕາມການເຈາະຈີ້ມຂອງ ສສຂ.

ໂອກາດດັ່ງກ່າວ, ກອງປະຊຸມຍັງໄດ້ຮັບຟັງການໂອ້ລົມຈາກປະທານກອງປະຊຸມ ເຊິ່ງທ່ານໄດ້ສະແດງຄວາມຍ້ອງຍໍຊົມເຊີຍບັນດາຜູ້ແທນກອງປະຊຸມທີ່ໄດ້ຍົກສູງຄວາມຮັບຜິດຊອບການເມືອງຂອງຕົນ, ເຂົ້າໃນການຄົ້ນຄວ້າປະກອບຄຳຄິດຄຳເຫັນໃສ່ບົດລາຍງານຂອງພາກສ່ວນກ່ຽວຂ້ອງຢ່າງສ້າງສັນ ແລະ ກົງໄປກົງມາ, ເອົາໃຈໃສ່ເພີ່ມທະວີການພົວພັນປະສານງານ ກັບພາກສ່ວນກ່ຽວຂ້ອງ; ສຸມໃສ່ຜັນຂະຫຍາຍບັນດານິຕິກຳ, ກົດໝາຍ, ລະບຽບການຕ່າງໆ ທີ່ໄດ້ຮັບຮອງ ແລະ ວາງອອກໃນໄລຍະຜ່ານມາ; ສືບຕໍ່ປັບປຸງແບບແຜນວິທີເຮັດວຽກຂອງຕົນໃຫ້ມີຄຸນນະພາບອັນໃໝ່ ບົນພື້ນຖານການປັບປຸງກົງຈັກໃໝ່ແລະຮຽກຮ້ອງໃຫ້ຂະແໜງການກ່ຽວຂ້ອງຈົ່ງສືບ ຕໍ່ເອົາໃຈໃສ່ສູ້ຊົນຈັດຕັ້ງປະຕິບັດບັນດາຄາດໝາຍທີ່ຍັງບໍ່ບັນລຸ.

(ອິນທີ ຊຽວສີຟ້າ)

# ກອງປະຊຸມຄົບຄະນະຂອງ 3 ຄະນະກຳມະການ ສະພາປະຊາຊົນແຂວງໄຊສົມບູນປະຈຳປີ 2022



(ສພຊ) ໃນຕອນເຊົ້າຂອງວັນທີ 23 ມັງກອນ 2023 ຢູ່ທີ່ຫ້ອງປະຊຸມສະໂມສອນເມືອງອະນຸວົງ ໄດ້ເປີດກອງປະຊຸມຂອງ 3 ຄະນະກຳມະການ ປະຈຳປີ 2022 ຂອງສະພາປະຊາຊົນແຂວງ (ສພຂ) ໄຊສົມບູນ ໂດຍເປັນປະທານຮ່ວມຂອງທ່ານ ສົມດີ ວົງພະຈັນ ປະທານຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ, ທ່ານ ທອງພຽນ ກົງສະເດັດ ຮອງປະທານຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ທ່ານ ນາງ ຄຳຫຼ້າ ທອງສີວອນ ຮອງປະທານຄະນະກຳມະການເສດຖະກິດ ແຜນການ ແລະ ການເງິນ; ມີບັນດາທ່ານຄະນະປະຈຳສະພາປະຊາຊົນແຂວງ, ສສຂ ປະຈຳເມືອງ, ພະນັກງານພາຍໃນ ສພຂ ເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມໃນຄັ້ງນີ້ ກໍເພື່ອຜັນຂະຫຍາຍມະຕິກອງປະຊຸມຄັ້ງປະຖົມມະລຶກຂອງສະພາປະຊາຊົນແຂວງໄຊສົມບູນ ຊຸດທີ II, ແຜນພັດທະນາ 5 ປີ (2021-2025) ຂອງ ສພຂ ກໍຄືຂອງ 3 ຄະນະກຳມະການໃຫ້ປາກົດເປັນຈິງ; ສະຫຼຸບຕີລາຄາຄືນການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ວາງທິດທາງແຜນການເຄື່ອນໄຫວວຽກງານ ປະຈຳປີ 2023 ຂອງຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ, ຄະນະກຳມະການເສດຖະກິດແຜນການ ແລະ ການເງິນ, ຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ; ເພື່ອຍົກສູງປະສິດທິພາບການເຄື່ອນໄຫວວຽກງານຂອງບັນດາຄະນະກຳມະການ ຕາມການທີ່ໄດ້ກຳນົດໄວ້ໃນມະຕິຂອງຄະນະປະຈຳວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ 3 ຄະນະກຳມະການ.

ກອງປະຊຸມຄົບຄະນະນີ້ ແມ່ນມີຄວາມສຳຄັນຫຼາຍ ເພາະເປັນກອງປະຊຸມຄັ້ງທຳອິດຂອງ 3 ຄະນະກຳມະການ ສພຂ ໄຊສົມບູນ ຊຸດທີ II ແລະ ໄຂຂຶ້ນໃນສະພາບການຂອງໂລກ ແລະ ພາກພື້ນມີການຜັນແປໄປຢ່າງສະຫຼັບຊັບຊ້ອນ ເຊິ່ງມີທັງກາລະໂອກາດທີ່ເອື້ອອຳນວຍ, ທັງມີສິ່ງທ້າທາຍທົດສອບນາໆປະການ ແລະ ປາກົດການຫຍໍ້ທໍ້ອື່ນໆໃນສັງຄົມທີ່ສົ່ງຜົນກະທົບຕໍ່ການຈັດຕັ້ງປະຕິບັດພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ກໍຄືການປະຕິບັດສາມພາລະບົດບາດຂອງ ສພຂ. ດັ່ງນັ້ນ, ເພື່ອຕອບສະໜອງກັບຄວາມຮຽກຮ້ອງຕ້ອງການໃນການຮັບໃຊ້ໜ້າທີ່ການເມືອງໃຫ້ແກ່ ສພຂ ໄຊສົມບູນ, ທັງ 3 ຄະນະກຳມະການຈຶ່ງໄດ້ເປີດກອງປະຊຸມຄົບຄະນະຂອງຕົນຂຶ້ນເພື່ອສະຫຼຸບຕີລາຄາການຈັດຕັ້ງປະຕິບັດວຽກງານ ປະຈຳປີ 2022 ແລະ ວາງທິດທາງແຜນການ ປະຈຳປີ 2023.

(ແສງຕາວັນ ລັດຕະນະວົງ)



## ກອງປະຊຸມ...

(ຕໍ່ຈາກໜ້າ 4)

ສຳເລັດສະຫຼຸບການເຄື່ອນໄຫວວຽກງານປະຈຳ 1 ເດືອນ, 3 ເດືອນ, 6 ເດືອນ, 9 ເດືອນ ແລະ 1 ປີ ຂອງສະພາປະຊາຊົນແຂວງ ແລະ ຄະນະເລຂາທິການສະພາປະຊາຊົນແຂວງ; ສຳເລັດການກະກຽມເນື້ອໃນ, ເອກະສານ, ບົດບັນທຶກກອງປະຊຸມ, ບົດລາຍງານຜົນສຳເລັດກອງປະຊຸມແລະຮັບໃຊ້ກອງປະຊຸມສະໄໝສາມັນເທື່ອທີ 2, ເທື່ອທີ 3 ຂອງສະພາປະຊາຊົນແຂວງ ຊຸດທີ II, ກອງປະຊຸມອື່ນໆ ແລະ ໄດ້ຕິດຕາມຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ແລະ ສະມາຊິກສະພາປະຊາຊົນແຂວງ ເຄື່ອນໄຫວເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 2, 3 ແລະ ມອບເຄື່ອງຊ່ວຍເຫຼືອໄພພິບັດນໍ້າຖ້ວມຢູ່ 3 ເມືອງຄື: ເມືອງໄຊ, ເມືອງຫຼາ ແລະ ເມືອງນາໝໍ້.

ຫຼັງຈາກນັ້ນ, ບັນດາຜູ້ແທນກອງປະຊຸມໄດ້ພ້ອມກັນປະກອບຄຳເຫັນໃສ່ບົດສະຫຼຸບການເຄື່ອນໄຫວວຽກງານຂອງຄະນະເລຂາທິການສະພາປະຊາຊົນແຂວງ ປະຈຳປີ 2022 ແລະ ທິດທາງແຜນການ ປະຈຳປີ 2023 ຢ່າງເປັນຂະບວນ ເພື່ອເຮັດໃຫ້ບົດສະຫລຸບດັ່ງກ່າວ ມີເນື້ອໃນຄົບຖ້ວນ, ສົມບູນຂຶ້ນກວ່າເກົ່າ.

ໃນຕອນທ້າຍ, ທ່ານ ນາງ ຄຳພອນ ພົມມະຈັນ ໄດ້ມີຄຳເຫັນໂອ້ລົມ ແລະ ເນັ້ນໜັກ ເຊິ່ງທ່ານໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຜົນງານໃນໄລຍະ 1 ປີທີ່ຜ່ານມາ ພ້ອມທັງເນັ້ນໜັກໃຫ້ພ້ອມກັນສືບຕໍ່ເອົາໃຈໃສ່ປະຕິບັດໜ້າທີ່ວິຊາສະເພາະຂອງຕົນດ້ວຍຄວາມຮັບຜິດຊອບສູງ, ຕັ້ງໜ້າຄົ້ນຄວ້າສຶກສາຮໍ່າຮຽນ ແລະ ປະຕິບັດໜ້າທີ່ໃນການເປັນເສນາທິການໃຫ້ໄດ້ຮັບຜົນດີ, ຮັບປະກັນການເປັນເສນາທິການທີ່ດີ ແລະ ມີຜົນສຳເລັດຕາມລະດັບຄາດໝາຍ.

(ແສງພອນ ອິນນະລົງ)

## ປະທານສະພາປະຊາຊົນແຂວງຄຳມ່ວນ ເຂົ້າຮ່ວມກອງປະຊຸມຄົບຄະນະສະຫະພັນກຳມະບານແຂວງ



(ສພຊ) ທ່ານ ບຸນມີ ພິມມະສອນ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ ໄດ້ເປັນປະທານກອງປະຊຸມຄົບຄະນະບໍລິຫານງານສະຫະພັນກຳມະບານແຂວງຄຳມ່ວນ ຄັ້ງທີ 4 ສະໄໝທີ VII ທີ່ໄດ້ຈັດຂຶ້ນໃນວັນທີ 18 ມັງກອນ 2023 ທີ່ຫ້ອງວ່າການແຂວງຄຳມ່ວນ ເຊິ່ງເປັນປະທານຮ່ວມໂດຍທ່ານ ວິໄລ ວົງຂະເສີມ ຮອງປະທານສູນກາງສະຫະພັນກຳມະບານລາວ ແລະ ທ່ານ ໂຕເຊີນ ອຸທັດສີ ປະທານສະຫະພັນກຳມະບານແຂວງ, ມີຄະນະບໍລິຫານງານສະຫະພັນກຳມະບານແຂວງ, ເມືອງ ແລະ ແຂກຖືກເຊີນເຂົ້າຮ່ວມ.

ໃນກອງປະຊຸມ, ຜູ້ເຂົ້າຮ່ວມໄດ້ຮັບຟັງການຜ່ານຮ່າງບົດສະຫຼຸບວຽກງານກຳມະບານຮອບດ້ານ ແລະ ທິດທາງແຜນການເຄື່ອນໄຫວປະຈຳປີ 2023, ຮ່າງບົດສະຫຼຸບວຽກງານການເງິນກອງທຶນປີ2022 ໂດຍສະເພາະການເຄື່ອນໄຫວວຽກງານກອງທຶນແຕ່ລະດ້ານ, ຕີລາຄາຜົນໄດ້ຮັບດ້ານດີ, ຂໍ້ຄົງຄ້າງ ແລະ ບົດຮຽນທີ່ຖອດຖອນໄດ້ ເຊິ່ງໃນໜຶ່ງປີຜ່ານມາໄດ້ເອົາໃຈໃສ່ໂຄສະນາສຶກສາອົບຮົມການເມືອງນຳພາ-ແນວຄິດໃຫ້ແກ່ສະມາຊິກກຳມະບານ, ກຳມະກອນ, ຊາວຜູ້ອອກແຮງງານ ແລະ ນັກຮຽນຮູ້ປັນຍາຊົນບັນດາເຜົ່າດ້ວຍຫຼາຍຮູບການ ເພື່ອເຮັດໃຫ້ມີຄວາມໜັກແໜ້ນທາງດ້ານການເມືອງ, ມີຫຼັກໝັ້ນມິດສັດຕູຢ່າງຈະແຈ້ງ, ມີສະຕິລະວັງຕົວຕໍ່ກົນອຸບາຍການຫັນປ່ຽນໂດຍສັນຕິ, ມີຄວາມສາມັກຄີກັນຢ່າງແໜ້ນແຟ້ນ.

ທົ່ວແຂວງມີ 10 ສະຫະພັນກຳມະບານເມືອງ, ມີ 7 ສະຫະພັນກຳມະບານພະແນກການ, ມີ 43 ຮາກຖານອ້ອມຂ້າງແຂວງ, ຂັ້ນເມືອງມີ 323 ກຳມະບານຮາກຖານ, ທົ່ວແຂວງມີສະມາຊິກທັງໝົດ 11.423 ສະຫາຍ ຍິງ 6.129 ສະຫາຍ ໃນນີ້, ຮ່ວມເຄື່ອນໄຫວເປັນສະມາຊິກກອງທຶນຊ່ວຍເຫຼືອເຊິ່ງກັນແລະກັນ ປັດຈຸບັນມີ 950 ສະຫາຍ ຍິງ 339 ສະຫາຍ, ຮ່ວມເຄື່ອນໄຫວເປັນສະມາຊິກກອງທຶນບັນເທົາທຸກປັດຈຸບັນມີ11.239 ສະຫາຍ ຍິງ 5.069 ສະຫາຍ. ພ້ອມນີ້ຍັງໄດ້ຮັບຟັງການຜ່ານເອກະສານແຜນຍຸດທະສາດປົກປ້ອງທາງສັງຄົມຂອງອົງການຈັດຕັ້ງກຳມະບານລາວຮອດປີ 2025 ແລະ ວິໄສທັດປີ 2030, ມະຕິກອງປະຊຸມສາມັນຄົບຄະນະບໍລິຫານງານສູນກາງສະຫະພັນກຳມະບານລາວຄັ້ງທີ 3 ສະໄໝທີ VIII ແລະ ເອກະສານສຳຄັນອື່ນໆ ອີກຈຳນວນໜຶ່ງ. ກອງປະຊຸມບັນດາຜູ້ເຂົ້າຮ່ວມຍັງໄດ້ພ້ອມກັນປະກອບຄຳຄິດ-ຄຳເຫັນ ຕໍ່ບັນດາເນື້ອໃນເອກະສານເພື່ອໃຫ້ມີຄວາມຄົບຖ້ວນສົມບູນ ແລະ ນຳໄປຈັດຕັ້ງປະຕິບັດໃຫ້ມີປະສິດທິຜົນ.

ໃນໂອກາດນີ້, ທ່ານ ບຸນມີ ພິມມະສອນ ຍັງໄດ້ມີຄຳເຫັນຕໍ່ກອງປະຊຸມວ່າ: ເພື່ອເປັນທິດໃນຕໍ່ໜ້າໃຫ້ສືບຕໍ່ເອົາໃຈໃສ່ທາງດ້ານການເມືອງແນວຄິດໃຫ້ສະມາຊິກກຳມະບານ ແລະ ການຈັດຕັ້ງຕ່າງໆເຂົ້າໃຈກ່ຽວກັບຄວາມສຳຄັນຂອງອົງການສະຫະພັນກຳມະບານໃຫ້ຫຼາຍຂຶ້ນ, ສືບຕໍ່ຊຸກຍູ້ວຽກງານ 5 ເປັນເຈົ້າການປະຕິບັດຂໍ້ແຂ່ງຂັນດັ່ງກ່າວໃຫ້ແຂງແຮງ, ມີປະສິດທິພາບສູງຂຶ້ນກວ່າເກົ່າ ແນໃສ່ສ້າງການຫັນປ່ຽນຢ່າງແຂງແຮງ, ໃນຖານະທີ່ເປັນອົງການຕົວແທນແຫ່ງສິດຜົນປະໂຫຍດຂອງຊົນຊັ້ນກຳມະກອນ, ຊາວຜູ້ອອກແຮງງານ ສະຫາຍໃນຄະນະສະຫະພັນກຳມະບານແຂວງ ຈຶ່ງເປັນເຈົ້າການໃນການຕິດຕາມ, ກວດກາຊຸກຍູ້ບັນດາຄະນະຮາກຖານ ກໍຄືສະມາຊິກໃຫ້ຫັນເອົາຄາດໝາຍສູ້ຊົນທີ່ວາງໄວ້ໃນມະຕິເປັນແຜນງານ-ໂຄງການລະອຽດໃນການຈັດຕັ້ງປະຕິບັດໃຫ້ເກີດໝາກ-ເກີດຜົນ.

## ກອງປະຊຸມປະຈຳປີ 2022 ແລະ ທິດທາງແຜນການປີ 2023 ຂອງ ສພຂ ຊຽງຂວາງ



(ສພຊ) ໃນວັນທີ 20 ມັງກອນ 2023 ຢູ່ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ຊຽງຂວາງ ໄດ້ເປີດກອງປະຊຸມ ປະຈຳປີ 2022 ແລະ ທິດທາງແຜນການ ປີ 2023 ຂອງ ສພຂ ໂດຍການເປັນປະທານຂອງທ່ານ ບຸນໂຮມ ເທດທານີ ປະທານ ສພຂ; ມີບັນທ່ານຄະນະປະຈຳ ສພຂ, ປະທານ-ຮອງປະທານຄະນະກຳມະການ, ຄະນະເລຂາທິການ, ຫົວໜ້າ-ຮອງຫົວໜ້າຂະແໜງ ແລະ ພະນັກງານວິຊາການສະພາປະຊົນແຂວງເຂົ້າຮ່ວມ.

ໃນກອງປະຊຸມ, ທ່ານ ວຽງໄຊ ສີວິໄລ ຮອງປະທານ ສພຂ ຜູ້ຊີ້ນຳວຽກງານຄະນະເລຂາທິການ ໄດ້ຜ່ານຮ່າງບົດສະຫຼຸບ ປະຈຳປີ 2022 ແລະ ທິດທາງແຜນການ ປີ 2023 ຂອງ ສພຂ ເຊິ່ງໄລຍະຜ່ານມາໄດ້ປະຕິບັດໜ້າທີ່ວຽກງານທີ່ສຳເລັດໄດ້ຫຼາຍດ້ານ ເປັນຕົ້ນແມ່ນ ສພຂ ໄດ້ເອົາໃຈໃສ່ສຶກສາອົບຮົມດ້ານການເມືອງແນວຄິດໃຫ້ພະນັກງານ-ລັດຖະກອນດ້ວຍຫຼາຍຮູບການ, ໄດ້ປະຕິບັດວຽກງານຕາມ 3 ພາລະບົດບາດ ເຊິ່ງໄດ້ທາບທາມການສ້າງ ແລະ ປັບປຸງກົດໝາຍທີ່ສະພາແຫ່ງຊາດ, ກະຊວງທີ່ກ່ຽວຂ້ອງສົ່ງມາໃຫ້ທາບທາມຢູ່ທ້ອງຖິ່ນ, ໄດ້ປະກອບຄຳເຫັນໃສ່ຮ່າງມະຕິຂອງຄະນະປະຈຳສະພາແຫ່ງຊາດ, ອອກມະຕິຮັບຮອງເອົາແຜນການລົງທຶນຂອງລັດ ແລະ ໂຄງການລົງທຶນຂອງລັດ, ຄົ້ນຄວ້າ ແລະ ຮັບຮອງເອົານິຕິກຳທີ່ສຳຄັນຕ່າງໆຕາມການສະເໜີຂອງອົງການປົກຄອງແຂວງ, ຕິດຕາມກວດກາ, ຊຸກຍູ້ການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ບັນດານິຕິກຳລຸ່ມກົດໝາຍ, 2 ວາລະແຫ່ງຊາດ ແລະ ບັນດາມະຕິທີ່ໄດ້ຮັບຮອງຢູ່ໃນກອງປະຊຸມສະໄໝສາມັນ, ນອກນັ້ນ ຍັງໄດ້ປະຕິບັດໜ້າທີ່ວຽກງານປິ່ນອ້ອມຕ່າງໆພາຍໃນ ສພຂ ເປັນຕົ້ນແມ່ນດ້ານການກະກຽມເນື້ອໃນເອກະສານຕ່າງໆໃຫ້ ສພຂ ໃນການເປີດກອງປະຊຸມຮ່ວມກັບພາກສ່ວນທີ່ກ່ຽວຂ້ອງ, ຂຶ້ນແຜນເຄື່ອນໄຫວວຽກງານຕ່າງໆ ແລະ ທິດທາງໃນຕໍ່ໜ້າ ສພຂ ຍັງໄດ້ສືບຕໍ່ສຶກສາອົບຮົມດ້ານການເມືອງ-ແນວຄິດ ໃຫ້ພະນັກງານ-ລັດຖະກອນ, ສືບຕໍ່ປະຕິບັດວຽກງານວິຊາສະເພາະເປັນຕົ້ນແມ່ນດ້ານນິຕິກຳ, ດ້ານການຕົກລົງບັນຫາສຳຄັນພື້ນຖານຂອງທ້ອງຖິ່ນ ແລະ ດ້ານການຕິດຕາມກວດກາ, ເອົາໃຈໃສ່ປະຕິບັດວຽກງານທີ່ປິ່ນອ້ອມໃຫ້ສຳເລັດ. ນອກນັ້ນ, ໃນທີ່ປະຊຸມຍັງໄດ້ປະດັບການຍ້ອງຍໍຜົນງານ 5 ປີ (2016-2020) ໃຫ້ພະນັກງານ ສພຂ ໃນນັ້ນ, ໄດ້ຮັບຫຼຽນໄຊແຮງງານຊັ້ນ I ມີ 1 ທ່ານ, ໄດ້ຮັບຫຼຽນກາແຮງງານ ມີ 21 ທ່ານ ຍິງ 11 ທ່ານ ແລະ ໃບຍ້ອງຍໍລັດຖະບານ ມີ 2 ທ່ານ ຍິງ 1 ທ່ານ.

ຕອນທ້າຍກອງປະຊຸມ, ທ່ານ ບຸນໂຮມ ເທດທານີ ຍັງມີຄຳເຫັນໂອ້ລົມຕໍ່ກັບພະນັກງານ ສພຂ ຈຶ່ງສືບຕໍ່ເອົາໃຈໃສ່ສືບຕໍ່ປະຕິບັດໜ້າທີ່ວຽກງານຂອງຕົນຢ່າງຕັ້ງໜ້າ, ສືບຕໍ່ຝຶກຝົນຫຼໍ່ຫຼອມຕົນເອງໃຫ້ມີຄຸນທາດການເມືອງ, ຄຸນສົມທຳປະຕິວັດ, ໃຫ້ມີແບບແຜນການເຮັດວຽກທີ່ດີ, ຮັກສາມູນເຊື້ອໃນການປະກອບສ່ວນເຂົ້າໃນໜ້າທີ່ວຽກງານຢ່າງຕັ້ງໜ້າ ເປັນແບບຢ່າງທີ່ດີ ແລະ ຮັກສາຄວາມສາມັກຄີພາບໃນ ແລະ ພາຍນອກໃຫ້ແໜ້ນແຟ້ນກວ່າເກົ່າ.

(ນາງ ສຸສະຫວັນ ອິນທະແສງ)

## ຄສຜງ ຕີລາຄາຄືນການຈັດຕັ້ງປະຕິບັດວຽກງານ ປະຈຳປີ 2022




(ສພຊ) ເພື່ອສະຫຼຸບຕີລາຄາຄືນຜົນການຈັດຕັ້ງປະຕິບັດວຽກງານຮອບດ້ານຂອງຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ (ຄສຜງ) ປະຈຳປີ 2022 ແລະ ວາງທິດທາງແຜນການ ປະຈຳປີ 2023 ໂດຍສະເພາະແມ່ນວຽກງານຕິດຕາມກວດກາການຈັດຕັ້ງປະຕິບັດລັດຖະທຳມະນູນ ແລະ ກົດໝາຍ, ມະຕິຂອງສະພາປະຊາຊົນຂັ້ນແຂວງໃນຂົງເຂດເສດຖະກິດແຜນການ ແລະ ການເງິນ ເຂົ້າໃນການພັດທະນາເສດຖະກິດ-ສັງຄົມ.

ໃນວັນທີ 19 ມັງກອນ 2023 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ອັດຕະປື ໄດ້ຈັດກອງປະຊຸມຄົບຄະນະປະຈຳປີ 2022 ຂອງ ຄສຜງ ສພຂ ອັດຕະປື ໂດຍການເປັນປະທານຂອງທ່ານ ສຸກສຳລານ ໄຊຍະແສງ ຮອງປະທານ ສພຂ ທັງເປັນປະທານ ຄສຜງ; ເຂົ້າຮ່ວມມີທ່ານ ນາງ ພອນມະນີ ຂຽນໄຊຍະວົງ ຮອງປະທານ ສພຂ, ມີບັນດາທ່ານ ຄສຜງ, ຄະນະກຳມະການ, ຄະນະເລຂາທິການ, ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ17 ແຂວງອັດຕະປື, ສະມາຊິກສະພາປະຊາຊົນແຂວງ, ຫົວໜ້າ-ຮອງຫົວໜ້າພະແນກການ ໃນຂົງເຂດເສດຖະກິດແຜນການ ແລະ ການເງິນ ແລະ ແຂກຖືກເຊີນຈຳນວນໜຶ່ງ.

ທ່ານ ສຸກສຳລານ ໄຊຍະແສງ ໄດ້ມີຄຳເຫັນກ່າວເປີດກອງປະຊຸມວ່າ: ກອງປະຊຸມຄົບຄະນະຂອງ ຄສຜງ ຄັ້ງນີ້ຈະໄດ້ຮັບຟັງການສະຫຼຸບຕີລາຄາການເຄື່ອນໄຫວວຽກງານປະຈຳປີ 2022 ແລະ ທິດທາງປີ 2023 ຂອງ ຄສຜງ; ການລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ປະຈຳປີ 2022 ແລະ ທິດທາງແຜນການປີ 2023; ການລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານຂອງແຂວງ ປະຈຳປີ 2022 ແລະ ທິດທາງແຜນການ ປີ 2023; ການລາຍງານກ່ຽວກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ປະຈຳປີ 2022 ແລະ ທິດທາງ ປີ 2023; ການຊີ້ແຈ້ງຂອງພະແນກກະສິກຳ ແລະ ປ່າໄມ້ແຂວງ; ການຊີ້ແຈ້ງຂອງພະແນກພະລັງງານ ແລະ ບໍ່ແຮ່ແຂວງ; ການຊີ້ແຈ້ງຂອງພະແນກໂຍທາທິການ ແລະ ຂົນສົ່ງແຂວງ ແລະ ຈະໄດ້ພ້ອມກັນແລກປ່ຽນທັດສະນະ, ປຶກສາຫາລືຮ່ວມກັນ ແລະ ເອກະພາບກັນ ກ່ຽວກັບບັນຫາທີ່ພົ້ນເດັ່ນເກີດຂຶ້ນຢູ່ໃນສັງຄົມ ທີ່ຕິດພັນກັບວຽກງານໃນຂົງເສດຖະກິດ, ແຜນການ ແລະ ການເງິນ ກ່ອນທີ່ຈະເຂົ້າພິຈາລະນາຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງ ສພຂ ຊຸດທີ II ສະນັ້ນ, ເພື່ອຮັບປະກັນທາງດ້ານເນື້ອໃນ ແລະ ເວລານັ້ນ ຈຶ່ງຮຽກຮ້ອງໃຫ້ບັນດາທ່ານກຳມະການ ແລະ ຜູ້ແທນທີ່ເຂົ້າຮ່ວມກອງປະຊຸມຄັ້ງນີ້ ຈຶ່ງໄດ້ສຸມສະຕິປັນຍາ ຄວາມຮູ້ຄວາມສາມາດ ແລະ ນຳໃຊ້ເວລາທີ່ຈຳກັດ ເພື່ອຄົ້ນຄວ້າ, ສົນທະນາປຶກສາຫາລື, ປະກອບຄວາມເຫັນຢ່າງກົງໄປກົງມາ ໂດຍທຽບໃສ່ພຶດຕິກຳຕົວຈິງທີ່ເກີດຂຶ້ນໃນທ້ອງຖິ່ນ ແລະ ຂະແໜງຂອງທ່ານ ເພື່ອເຮັດໃຫ້ຫົວຂໍ້ ແລະ ເນື້ອໃນທີ່ເອົາເຂົ້າມາຄົ້ນຄວ້າ ປຶກສາຫາລືກັນໃນກອງປະຊຸມຄັ້ງນີ້ ໃຫ້ມີເນື້ອໃນທີ່ຄົບຖ້ວນ, ສົມບູນ ສາມາດຮັບຮອງເອົາ ແລະ ຈັດຕັ້ງປະຕິບັດໄດ້ໃຫ້ເກີດຜົນຕົວຈິງ.

(ວິນັດ)




# ກົດໝາຍ ວ່າດ້ວຍການຄຸ້ມຄອງອາວຸດ ແລະ ວັດຖຸລະເບີດ

ຕໍ່ຈາກສະບັບກ່ອນ...

### ໝວດທີ 3
### ການຄຸ້ມຄອງວັດຖຸລະເບີດທາງອຸດສາຫະກຳ

**ມາດຕາ 32 ການຄຸ້ມຄອງວັດຖຸລະເບີດທາງອຸດສາຫະກຳ**

ກະຊວງປ້ອງກັນປະເທດ ເປັນຜູ້ຄຸ້ມຄອງວັດຖຸລະເບີດທາງອຸດສາຫະກຳ ດ້ວຍການ ຄວບຄຸມ, ຕິດຕາມ ກວດກາ, ເກັບກຳບັນຊີ ແລະ ອະນຸຍາດ ກ່ຽວກັບການຜະລິດ, ເກັບຮັກສາ, ຂົນສົ່ງ ແລະ ເຄື່ອນຍ້າຍ, ຈຳໜ່າຍ ແລະ ຈັດຊື້, ນຳໃຊ້, ນຳເຂົ້າ, ສົ່ງອອກ, ນຳຜ່ານ ແລະ ທຳລາຍ ເພື່ອຮັບປະກັນຄວາມສະຫງົບ,

ຄວາມເປັນລະບຽບຮຽບຮ້ອຍ ແລະ ຄວາມໝັ້ນຄົງຂອງຊາດ.

ກະຊວງປ້ອງກັນຄວາມສະຫງົບ ເປັນຜູ້ ຄວບຄຸມ, ຕິດຕາມ ກວດກາ ແລະ ເກັບກຳບັນຊີ ກ່ຽວກັບ ການນຳໃຊ້ວັດຖຸລະເບີດທາງອຸດສາຫະກຳ ຂອງ ນິຕິບຸກຄົນ ແລະ ການຈັດຕັ້ງ.

**ມາດຕາ 33 ການຜະລິດວັດຖຸລະເບີດທາງອຸດສາຫະກຳ**

ການຜະລິດວັດຖຸລະເບີດທາງອຸດສາຫະກຳ ຕ້ອງປະຕິບັດຕາມມາດຕະຖານເຕັກນິກ, ຄວາມປອດໄພ ຂອງການຜະລິດ ຕາມລະບຽບການຂອງກະຊວງປ້ອງກັນປະເທດ, ກົດໝາຍທີ່ກ່ຽວຂ້ອງ ແລະ ຮັບປະກັນຄຸນນະພາບຂອງຜະລິດຕະພັນ ໃຫ້ໄດ້ຕາມມາດຕະຖານທີ່ກຳນົດໄວ້.

**ມາດຕາ 34 ການເກັບຮັກສາວັດຖຸລະເບີດທາງອຸດສາຫະກຳ**

ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ໄດ້ຮັບອະນຸຍາດ ຜະລິດ, ນຳເຂົ້າ, ຈຳໜ່າຍ ແລະ ນຳໃຊ້ ວັດຖຸລະ ເບີດທາງອຸດສາຫະກຳ ຕ້ອງເກັບຮັກສາໄວ້ໃນສາງທີ່ໄດ້ມາດຕະຖານຄວາມປອດໄພ, ຕັ້ງຢູ່ຫ່າງໄກຈາກຊຸມຊົນ ຕາມລະບຽບການຂອງກະຊວງປ້ອງກັນປະເທດ.

**ມາດຕາ 35 ການຂົນສົ່ງ ແລະ ການເຄື່ອນຍ້າຍວັດຖຸລະເບີດທາງອຸດສາຫະກຳ**

ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງ ຂົນສົ່ງ ແລະ ເຄື່ອນຍ້າຍວັດຖຸລະເບີດທາງອຸດສາຫະກຳ ຕ້ອງໄດ້ຂໍອະນຸຍາດນຳກະຊວງປ້ອງກັນປະເທດ.

ການຂົນສົ່ງ ແລະ ເຄື່ອນຍ້າຍ ວັດຖຸລະເບີດທາງອຸດສາຫະກຳ ຕ້ອງຮັບປະກັນຄວາມປອດໄພ, ນຳໃຊ້ພາ ຫະນະສະເພາະ, ມີບຸກຄະລາກອນທີ່ຊຳນານງານ, ຂົນສົ່ງ ແລະ ເຄື່ອນຍ້າຍ ຕາມເສັ້ນທາງທີ່ກຳນົດ, ມີລົດເປີດທາງ, ຮັກສາໄລຍະຫ່າງ, ຄວາມໄວ, ຈອດຕາມສະຖານທີ່ກຳນົດ ແລະ ປະຕິບັດຕາມລະບຽບການຂອງກະຊວງປ້ອງກັນປະເທດ.

**ມາດຕາ 36 ການຈຳໜ່າຍ ແລະ ຈັດຊື້ ວັດຖຸລະເບີດທາງອຸດສາຫະກຳ**

ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງ ຈຳໜ່າຍ ແລະ ຈັດຊື້ ວັດຖຸລະເບີດທາງອຸດສາຫະກຳ ຕ້ອງໄດ້ຂໍອະນຸຍາດນຳກະຊວງປ້ອງກັນປະເທດ ແລະ ປະຕິບັດຕາມກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

**ມາດຕາ 37 ການນຳໃຊ້ວັດຖຸລະເບີດທາງອຸດສາຫະກຳ**

ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງນຳໃຊ້ວັດຖຸລະເບີດທາງອຸດສາຫະກຳ ຕ້ອງຂໍອະນຸຍາດນຳກະຊວງປ້ອງກັນປະເທດ. ໃນເວລາມີການນຳໃຊ້ ຕ້ອງແຈ້ງໃຫ້ຊຸມຊົນ, ມີລະບົບເຕືອນໄພ, ມາດຕະການປ້ອງກັນຄວາມປອດໄພ ແລະ ປະຕິບັດຕາມລະບຽບການ ຂອງກະຊວງປ້ອງກັນປະເທດ.

ການນຳໃຊ້ວັດຖຸລະເບີດ ທີ່ເປັນດອກໄມ້ໄຟ ເພື່ອສະເຫຼີມສະຫຼອງ ວັນສຳຄັນຕ່າງໆຂອງຊາດ ໃຫ້ຂໍອະ ນຸຍາດນຳກະຊວງປ້ອງກັນປະເທດ, ສຳລັບງານບຸນປະເພນີ ແລະ ງານເທດສະການຕ່າງໆ ໃຫ້ຂໍອະນຸຍາດນຳຂະແໜງການປ້ອງກັນຄວາມສະຫງົບ.

**ມາດຕາ 38 ການນຳເຂົ້າ, ສົ່ງອອກວັດຖຸລະເບີດທາງອຸດສາຫະກຳ**

ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງ ນຳເຂົ້າ, ສົ່ງອອກ ວັດຖຸລະເບີດທາງອຸດສາຫະກຳ ຕ້ອງໄດ້ຂໍອະນຸຍາດນຳກະຊວງປ້ອງກັນປະເທດ ແລະ ປະຕິບັດຕາມ ກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

**ມາດຕາ 39 ການນຳວັດຖຸລະເບີດທາງອຸດສາຫະກຳ ຜ່ານ ສປປລາວ**

ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງ ນຳວັດຖຸລະເບີດທາງອຸດສາຫະກຳ ຜ່ານ ສປປລາວ ຕ້ອງໄດ້ຂໍອະນຸຍາດນຳ ກະຊວງປ້ອງກັນປະເທດ ແລະ ປະຕິບັດຕາມມາດຕາ 35 ຂອງກົດໝາຍສະບັບນີ້.

**ມາດຕາ 40 ການທຳລາຍວັດຖຸລະເບີດທາງອຸດສາຫະກຳ**

ວັດຖຸລະເບີດທາງອຸດສາຫະກຳ ທີ່ເສື່ອມຄຸນນະພາບ, ໝົດອາຍຸການນຳໃຊ້ ລວມທັງສິ່ງເສດເຫຼືອ ຂອງວັດຖຸລະເບີດດັ່ງກ່າວ ຕ້ອງໄດ້ຮັບການທຳລາຍ ຕາມລະບຽບການ.

ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງທຳລາຍວັດຖຸລະເບີດທາງອຸດສາຫະກຳ ຕາມທີ່ໄດ້ກຳນົດໄວ້ໃນວັກທີໜຶ່ງຂອງມາດຕານີ້ ຕ້ອງຂໍອະນຸຍາດນຳກະຊວງປ້ອງກັນປະເທດ ແລະ ມີການຕິດຕາມ ກວດກາ ຂອງຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ພ້ອມທັງຮັບຜິດຊອບຄ່າໃຊ້ຈ່າຍໃນການທຳລາຍ.

### ພາກທີ IV
### ການດຳເນີນທຸລະກິດກ່ຽວກັບ ອາວຸດ ແລະ ວັດຖຸລະເບີດ

**ມາດຕາ 41 ການດຳເນີນທຸລະກິດກ່ຽວກັບ ອາວຸດ ແລະ ວັດຖຸລະເບີດ**

ການດຳເນີນທຸລະກິດກ່ຽວກັບ ອາວຸດ ແລະ ວັດຖຸລະເບີດ ແມ່ນ ການເຄື່ອນໄຫວ ຜະລິດ, ນຳເຂົ້າ, ສົ່ງອອກ, ຂົນສົ່ງ, ຈຳໜ່າຍ ແລະ ບໍລິການຊີເຈາະຈູດລະເບີດ.

ອ່ານຕໍ່ສະບັບໜ້າ...




## ວິທີເຮັດວຽກ

ປັດຈຸບັນນີ້ ຂະບວນການປະຕິວັດພວມກ້າວຂຶ້ນສູງທີ່ສຸດ ແຕ່ວ່າພວກເຮົາລອງຖາມພະນັກງານ ແລະ ສະມາຊິກພັກເຮົາເບິ່ງດູວ່າ: ມີຈັກຄົນເຂົ້າໃຈທິດສະດີ ແລະ ຮູ້ຈັກນຳເອົາທິດສະດີນັ້ນມາໃຊ້ເຂົ້າໃນການເມືອງ, ການທະຫານ, ການເສດຖະກິດ ແລະວັດທະນະທຳ ມີຈັກຄົນເຂົ້າໃຈວ່າ: ວັດຖຸນິຍົມ ແລະ ຈິດຕະນິຍົມ "ແມ່ນຫຍັງ"?

ຍ້ອນວ່າຂາດທິດສະດີດັ່ງນັ້ນ, ເວລາພົບວຽກການອັນໃດກໍຈຶ່ງບໍ່ຮູ້ກວດເບິ່ງໃຫ້ຄັກ, ຊັ່ງຊາເບິ່ງໃຫ້ຄັກ, ຊັ່ງຊາເບິ່ງໃຫ້ຖືກ. ແລ້ວຈັດການໄປໃຫ້ດີ, ບໍ່ຮູ້ຈັກຈຳແນກຄັກ ເຖິງເງື່ອນໄຂຂອງສະພາບການຂອງພາຍນອກ, ຕົນເອງຄິດແນວໃດກໍເລີຍເຮັດຕາມຄວາມຄິດຂອງຕົນເອງ, ແນວນັ້ນ, ຜົນທີ່ໄດ້ຮັບກໍມັກແຕ່ປະລາໄຊເລື້ອຍໆ.

ນັ້ນແມ່ນຕົວຢ່າງຂອງການຂາດທິດສະດີ ໃນພະຍາດໃນເຮົາ. ມີພະນັກງານ, ສະມາຊິກຂອງພັກຈຳນວນໜຶ່ງ ເຮັດວຽກການເປັນ, ມີບົດຮຽນ, ມັນເປັນທຳມະດາທີ່ອ້າຍເອື້ອຍນ້ອງເຫຼົ່ານັ້ນ ເປັນຄົນຜູ້ປະເສີດຂອງພັກ, ແຕ່ເຂົາຫາກມັກຕິດພະຍາດດູຖູກທິດສະດີ, ເຂົາລືມເສຍວ່າ: ຖ້າເຂົາມີບົດຮຽນແນວນັ້ນແລ້ວ ຫາກຮູ້ຈັກທິດສະດີຕື່ມອີກ ຈະພາໃຫ້ວຽກການຂອງເຂົາເຮັດໄດ້ດີຂຶ້ນກວ່າເກົ່າຫຼາຍ ເຂົາລືມວ່າ ບົດຮຽນຂອງເຂົານັ້ນແມ່ນຈະດີພຽງໃດກໍຕາມ ມັນກໍເປັນພຽງແຕ່ພາກສ່ວນໜຶ່ງຂອງຄວາມດີ ແລະ ໜັກໄປແຕ່ໃນດ້ານດຽວເທົ່ານັ້ນ.

ມີບົດຮຽນ ແຕ່ບໍ່ມີທິດສະດີ ແມ່ນຄືຕາໜຶ່ງບອດຕາໜຶ່ງມົວ (ຟາງ). ອ້າຍເອື້ອຍນ້ອງເຫຼົ່ານັ້ນ ຍັງຕ້ອງຄົ້ນຄວ້າຮ່ຳຮຽນທິດສະດີຕື່ມອີກ, ຈຶ່ງຈະກາຍເປັນພະນັກງານຢ່າງຄົບຖ້ວນໄດ້. ມີບາງຄົນອ່ານປຶ້ມໄດ້, ອ່ານປຶ້ມໝົດຫຼາຍຫົວ, ການອົດທົນອ່ານປຶ້ມ ແລະ ອ່ານປຶ້ມໃນຫຼາຍຫົວນັ້ນ ເປັນການດີທີ່ສຸດ, ແຕ່ວ່າເຮັດໄດ້ແນວນັ້ນ ກໍຍັງບໍ່ທັນແມ່ນຮູ້ຈັກທິດສະດີແທ້ເທື່ອ.

ທິດສະດີນັ້ນເປັນຂອງທີ່ຕ້ອງໃຊ້ເຂົ້າໃນວຽກງານຕົວຈິງ. ທິດສະດີທີ່ບໍ່ເອົາໃຊ້ເຂົ້າໃນວຽກການຕົວຈິງ ແມ່ນທິດສະດີນ້ຳເຕົ້າເປົ່າ. ແມ່ນວ່າຈະໄດ້ອ່ານປຶ້ມທິດສະດີເຖິງພຽງໃດກໍຕາມ, ຖ້າຫາກບໍ່ຮູ້ນຳເອົາມາປະຕິບັດນັ້ນ, ກໍບໍ່ຕ່າງຫຍັງກັບຕູ້ໃສ່ປຶ້ມ. ອ່ານປຶ້ມຫຼາຍຫົວສຳລັບເອົາມາອວດອ້າງວ່າຕົນເປັນຜູ້ເກັ່ງນັ້ນ ມັນບໍ່ແມ່ນຮູ້ຈັກທິດສະດີ.

ອ້າຍນ້ອງຜູ້ເປັນແນວນັ້ນ ຕ້ອງອອກແຮງປະຕິບັດໃນວຽກການຕົວຈິງເສຍກ່ອນ ຈຶ່ງຈະກາຍເປັນຜູ້ຮູ້ຈັກທິດສະດີໄດ້. ລວມຄວາມວ່າ ພະນັກງານແຕ່ລະຄົນ ແລະ ສະມາຊິກຂອງພັກແຕ່ລະຄົນ ຕ້ອງຮຽນທິດສະດີ, ຕ້ອງນຳເອົາທິດສະດີທີ່ຕົນຮຽນໄດ້ນັ້ນ, ໄປປະຕິບັດເຂົ້າໃນວຽກການຕົວຈິງ, ຕ້ອງແກ້ໄຂດັດແປງພະຍາດຂາດທິດສະດີ, ດູຖູກທິດສະດີ ແລະ ທິດສະດີນ້ຳເຕົ້າເປົ່າໃຫ້ຈົບໄດ້.

ອ່ານຕໍ່ສະບັບໜ້າ...




# ຊັບພາຍໃນ ຊັບພາຍນອກ

# ດົ້ນກົບເມກ

ຊັບສິນເງິນຄຳຍ່ອມເປັນຂອງປາຖະໜາສຳລັບມະນຸດ ເພື່ອເອົາໄວ້ລ້ຽງຊີບ ຫຼື ບາງຄົນເອົາໄວ້ອວດໂອ້ສະແດງຖານະໃຫ້ມີໜ້າມີຕາໃນສັງຄົມຕາມກະແສບູຊາວັດຖຸເປັນຊີວິດຈິດໃຈ ເຊິ່ງຄວາມຈິງແລ້ວຊັບດັ່ງກ່າວ ມັນເປັນພຽງຂອງສົມມຸດໃຊ້ທີ່ມະນຸດສ້າງຂຶ້ນ ເຊິ່ງຖ້າໃຜຕົກໃນກະແສບູຊາວັດຖຸດັ່ງກ່າວ ກໍຈະດີ້ນຣົນຊອກຫາບໍ່ພຽງແຕ່ໃຫ້ໄດ້ມາລ້ຽງຊີບແຕ່ແຂ່ງຂັນອວດໂຊເຊິ່ງຊັບພາຍໃນພະພຸດທະເຈົ້າສອນໄວ້ຄື:

**1. ສັດທາຄືຄວາມເຊື່ອ:** ເຊື່ອໝັ້ນໃນຄຸນຄວາມດີ, ເຊື່ອໃນການເຮັດດີ-ສ້າງກຳດີໄວ້ ແລ້ວຜົນດີຈະປາກົດຕາມມາ ຖ້າຄົນໃດເຊື່ອກຳດີນຳໄປສູ່ການເຮັດດີ ມັນກໍເປັນຊັບສິນສຳຄັນປະການໜຶ່ງໃນການສ້າງສັນສິ່ງດີງາມໃຫ້ຊາດ ແລະ ສັງຄົມ.

**2. ສິນຄື:** ຄວາມປະພຶດຖືກຕ້ອງດີງາມ ບໍ່ຂົ່ມເພັ່ງຂົ່ມໂຕບັງບຽດຄົນອື່ນ, ບໍ່ປະພຶດຕົນມະທຳຂໍ້ນີ້ຍິ່ງສຳຄັນຕໍ່ຄວາມເປັນຄົນ ຖ້າຂາດໄປກໍບໍ່ຕ່າງກັບສັດເດຍລະສານ ເພາະມີແຕ່ກິນ ແລະ ສືບພັນ.

**5. ພາຫຸສັດຈະຄື:** ຊັບທີ່ເປັນຄວາມຮູ້ ເປັນຄົນສຶກສາຄົ້ນຄວ້າ, ເຂົ້າໃຈແທ້ຈິງໃນໂລກອັນໃດຖືກ-ຜິດ.

**6. ຈາຄະຄື:** ການບໍລິຈາກ, ເສຍສະຫຼະແບ່ງປັນ ເປັນການທຳລາຍຄວາມຂີ້ຖີ່ໃນຈິດໃຈ-ການໃຫ້ທານຍັງເປັນການສົງເຄາະຮັກແພງມະນຸດດ້ວຍກັນ.



ກັນຕາມພາສາຂອງຊາວໂລກ; ບາງຄົນໃຊ້ຊີວິດຫາຊັບພາຍນອກຈົນຊີວິດຂາດຄວາມສົມດູນ; ສຸຂະພາບຮ່າງກາຍຊຸດໂຊມຮອດຕອນເວລາມີຊັບຫຼາຍກໍບໍ່ມີໂອກາດໄດ້ໃຊ້ກໍມີ.

ຊັບພາຍນອກ ແລະ ຊັບພາຍໃນ ຄວນຈະມີຄຽງຄູ່ກັນ ເພື່ອໃຫ້ເກີດຄວາມງົດງາມ ແລະ ຄວາມສົມດູນໃນການໃຊ້ຊີວິດ, ຜູ້ຂຽນເຫັນວ່າ: ຊັບພາຍນອກ ຈະມີຄຸນຄ່າ ແລະ ມີຄວາມໝາຍຕ້ອງມີຊັບພາຍໃນເປັນພື້ນຖານຂອງຊີວິດໃນທາງເສື່ອມເສຍກຽດ ເຊິ່ງເປັນຊັບໂຕທີສອງທີ່ສົ່ງເສີມຊີວິດໃຫ້ຈະເລີນກ້າວໜ້າ.

**3. ຫິຣິ** ຄືຄວາມລະອາຍ ຕໍ່ການເຮັດບາບ ປະພຶດຜິດສິນທຳ ຂໍ້ນີ້ສຳຄັນ ຖ້າວ່າຄົນເຮົາຂາດຄວາມລະອາຍແກ່ໃຈກໍບໍ່ຕ່າງກັບສັດ ດັ່ງນັ້ນ ບູຮານຈຶ່ງເວົ້າວ່າເປັນຄົນດື້ດ້ານມືດບອດ.

**4. ໂອດຕັບປະຄື:** ຄວາມຢ້ານຕໍ່ການເຮັດບາບ, ລະເມີດກົດໝາຍ, ລະເມີດສິນທຳ ແລະ ຮີດຄອງປະເພນີ, ຄຸນ

**7. ປັນຍາຄື:** ຄຸນນະທຳທີ່ເປັນຊັບຂໍ້ສຸດທ້າຍທີ່ຄວບຄຸມເອົາຄຸນນະທຳທັງໝົດຂ້າງເທິງ.

ສັງລວມວ່າ: ການມີຊັບສິນເງິນຄຳພາຍນອກ ຖ້າໃຜສະຫຼາດໃຊ້ເປັນຖານໄຕ່ເຕົ້າໄປຫາຊັບພາຍໃນຄືຄຸນນະທຳ 7 ປະການເພື່ອເປັນຫຼັກການດຳເນີນຊີວິດໃຫ້ຖືກຕ້ອງດີງາມ ຈະບໍ່ຫຼົງເຫື່ກະແສວັດຖຸຕາມຊາວໂລກທີ່ສົມມຸດກັນ; ຈະເຮັດໃຫ້ການດຳລົງຊີວິດມີຄວາມຜາສຸກ.

# ເງິນເດືອນ ຫຼື ຄ່າແຮງງານຂັ້ນຕ່ຳ

# ໂດຍ: ສອນໃຈ ໄກທີສັກ ເລື່ອງພິມມີໄຊ

ໃນປັດຈຸບັນ, ສະພາບເສດຖະກິດ-ສັງຄົມຂອງ ສປປ ລາວ ທີ່ກຳລັງປະເຊີນກັບບັນຫາ ໄພເງິນເຟີ້, ລາຄາສິນຄ້າໃນທ້ອງຕະຫຼາດເພີ່ມສູງຂຶ້ນ ເຊິ່ງສົ່ງຜົນກະທົບຕໍ່ການດຳລົງຊີວິດຂອງປະຊາຊົນ ກໍຄື ຜູ້ອອກແຮງງານ, ລາຍຮັບບໍ່ພຽງພໍກັບລາຍຈ່າຍ ຫຼື ເວົ້າອີກຢ່າງໜຶ່ງວ່າ ລາຍຈ່າຍຫຼາຍກວ່າລາຍຮັບ. ແຕ່ເຖິງຢ່າງໃດກໍຕາມ ລັດຖະບານ ກໍໄດ້ພະຍາຍາມຄົ້ນຄວ້າ, ຊອກຫາວິທີແກ້ໄຂຕໍ່ກັບບັນຫາດັ່ງກ່າວ ເພື່ອເຮັດໃຫ້ການດຳລົງຊີວິດຂັ້ນພື້ນຖານຂອງປະຊາຊົນ ກໍຄື ຜູ້ອອກ ແຮງງານ ນັບມື້ດີຂຶ້ນເປັນກ້າວໆ.

ອີງຕາມມາດຕາ 105 ຂອງກົດໝາຍວ່າດ້ວຍແຮງງານ ສະບັບເລກທີ 43/ສພຊ, ລົງວັນທີ 24 ທັນວາ 2013 ໄດ້ກຳນົດວ່າ ''ຄ່າແຮງງານຂັ້ນຕ່ຳສຸດ ແມ່ນ ລະດັບຂອງ ເງິນເດືອນ ຫຼື ຄ່າແຮງງານ ທີ່ລັດປະກາດໃຊ້ ໃນແຕ່ລະໄລຍະ ເພື່ອຮັບປະກັນການດຳລົງຊີວິດຂັ້ນພື້ນຖານຂອງຜູ້ອອກແຮງງານ''.

ເງິນເດືອນພື້ນຖານຂອງຜູ້ອອກແຮງງານ ແມ່ນຄ່າຕອບແທນການເຮັດວຽກ ຂອງຜູ້ອອກແຮງງານ ເຊິ່ງແມ່ນຜູ້ໃຊ້ແຮງງານ ເປັນຜູ້ຈ່າຍໃຫ້ຜູ້ອອກແຮງງານ ຕາມສັນຍາແຮງງານ ບົນພື້ນຖານການຕົກລົງເຫັນດີນຳກັນ ໂດຍອີງຕາມວຸດທິການສຶກສາ, ລະດັບສີມືແຮງງານ, ຄວາມຮູ້, ຄວາມສາມາດ, ຄວາມສຳນານງານ ແລະ ປະສົບການໃນການເຮັດວຽກຂອງຜູ້ອອກແຮງງານ ຢ່າງໜ້ອຍໜຶ່ງຄັ້ງຕໍ່ເດືອນ. ຜູ້ອອກແຮງງານ ນອກຈາກໄດ້ຮັບເງິນເດືອນພື້ນຖານແລ້ວ ຍັງຈະໄດ້ຮັບເງິນອຸດໜູນເພີ່ມອີກ ເຊັ່ນ: ເງິນອຸດໜູນຕຳແໜ່ງ, ເງິນຄ່າຜະລິດ ແລະ ນະໂຍບາຍອື່ນຕາມຕຳແໜ່ງ ຫຼື ໜ້າທີ່ຮັບຜິດຊອບ ຂອງຜູ້ອອກແຮງງານ.

ສະນັ້ນ, ຕໍ່ກັບ ເງິນເດືອນ ຫຼື ຄ່າແຮງງານຂັ້ນຕ່ຳຂອງຜູ້ອອກແຮງງານນັ້ນ ແມ່ນ ລັດຖະບານ ເປັນຜູ້ກຳນົດ ແລະ ໄດ້ປັບຂຶ້ນຕາມການຂະຫຍາຍຕົວຂອງເສດຖະກິດ ເປັນແຕ່ລະໄລຍະ ຊຶ່ງກ່ອນປີ 2018 ລັດຖະບານ ໄດ້ກຳນົດ ເງິນເດືອນ ຫຼື ຄ່າແຮງງານຂັ້ນຕ່ຳຂອງຜູ້ອອກແຮງງານ ຢູ່ ສປປ ລາວ ຈຳນວນ 900.000 ກີບ (ເກົ້າແສນກີບ) ຕໍ່ຄົນ ຕໍ່ເດືອນ; ມາຮອດປີ 2018 ລັດຖະບານ ກໍໄດ້ປັບ ເງິນເດືອນ ຫຼື ຄ່າແຮງງານຂັ້ນຕ່ຳ ຂອງຜູ້ອອກແຮງງານ ຈາກຈຳນວນ 900.000 ກີບ (ເກົ້າແສນກີບ) ມາເປັນ 1.100.000 ກີບ (ໜຶ່ງລ້ານໜຶ່ງແສນກີບ) ຕໍ່ຄົນ ຕໍ່ເດືອນ. ເຊິ່ງໃນປັດຈຸບັນ ເງິນ ເດືອນ ຫຼື ຄ່າແຮງງານຂັ້ນຕ່ຳ ຂອງຜູ້ອອກແຮງງານ ແມ່ນ 1.200.000 ກີບ (ໜຶ່ງລ້ານສອງແສນກີບ) ຕໍ່ຄົນ ຕໍ່ເດືອນ.ແລະ ຄາດວ່າ ອາດຈະມີການປັບປຂຶ້ນໃນອານາຄົດອັນໃກ້ໆນີ້ ເພື່ອໃຫ້ສົມດູນກັບຄ່າຄອງຊີບ ແລະ ສະພາບການຂະຫຍາຍຕົວຂອງເສດຖະກິດຕະຫຼາດ.



# ຂຽນຄຳລາວໃຫ້ຖືກ

# ຄູແສງ

| ຄຳຖືກ | ຄຳຜິດ |
|---|---|
| ອານິສົງ | ອະນິສົງ |
| ອານຸພາບ | ອະນຸພາບ |
| ອານາຈັກ | ອະນາຈັກ |
| ອາບັດ | ອະບັດ |
| ອາໄບ | ອະໄບ |
| ອາພັບ | ອະພັບ |
| ອາລະອະເກົາ | ອະລາອະເກົາ |
| ອາລະວາດ | ອະລາວາດ |
| ອາວຸໂສ | ອະວຸໂສ |




ຈະຕຸພູມ ແປວ່າ ພູມທັງ 4 ຫຼື ຊັ້ນທັງ 4 ຄື:

1. ກາມາວະຈະລະພູມ: ຊັ້ນຂອງສັດຜູ້ທ່ອງທ່ຽວໄປມາ ຢູ່ໃນກາມະພົບ (ພົບແມ່ນຊາດເກີດຂອງສັດ-ນັບທັງສັດມະນຸດ) ແມ່ນພົບທີ່ຍັງໃຊ້ກາມ.

2. ຣູປາວະຈະລະພູມ: ແມ່ນຊັ້ນຂອງສັດຜູ້ທ່ອງທ່ຽວຢູ່ໃນຣູປະພົບ ໝາຍເຖິງຊາດເກີດເປັນສັບພະສັດ ທີ່ມີຮູບນາມ (ຍັງວົນວາຍຕາຍເກີດໃນພົບ).

3. ອະຣູປາວະຈະລະພູມ: ແມ່ນຊັ້ນຂອງສັດຜູ້ທ່ອງທ່ຽວຢູ່ໃນອາຣູປະພົບ.

4. ໂລກຸດຕະລະພູມ: ຊັ້ນຂອງສັດ ຜູ້ພົ້ນຈາກໂລກ (ຜູ້ທີ່ໄປເຖິງພະນິບພານແລ້ວ) ໃນພາສາບາລີເອີ້ນວ່າ "ໂລກຸດຕະຣະ" ແປວ່າເໜືອໂລກ ຫຼື ພົ້ນວິໄສຂອງໂລກໄປແລ້ວ.

"ຈະຕຸພູມ" ເປັນພາສາບາລີ ພາສາຂອງຄົນອິນເດຍໃຕ້ ໃນສະໄໝບູຮານ.



## ສຸຂະສະບາຍຫາຍໂຣຄ

# 5 ສາເຫດຂອງອາການເຈັບຫົວທີ່ທ່ານຕ້ອງຮູ້

**ແປ ແລະ ຮຽບຮຽງໂດຍ: ສາວແອ່ນ**



**1. ເຈັບຫົວຮອບຫົວ**

ອາການເຈັບຫົວຮອບຫົວ ເປັນອາການເຈັບພົບຫຼາຍທີ່ສຸດ ອັນເນື່ອງມາຈາກກ້າມເນື້ອບໍລິເວນຫົວຕຶງ ໂດຍຈະເກີດເກີດຂຶ້ນຢູ່ບໍລິເວນໜ້າຜາກ ແລະ ຂະມັບທັງສອງດ້ານ ສຳລັບບາງຄົນບາງຄັ້ງຈະຮູ້ສຶກປວດໜ້າວໄປຮອດດ້ານງ່ອນດົ້ນ ແລະ ກ້ານຄໍ ລວມທັງບ່າໄຫຼ່ ເຊິ່ງທັງໝົດນັ້ນແມ່ນເກີດມາຈາກຄວາມຕຶງຄຽດ ຫລື ໂລກຄຽດ ເພາະວ່າເມື່ອເຮົາຮູ້ສຶກຕຶງຄຽດຮ່າງກາຍຈະປ່ອຍສານເຄມີບາງຊະນິດເຮັດໃຫ້ກ້າມເນື້ອບໍລິເວນຂະມັບ, ຫົວ ແລະ ບ່າໄຫຼ່ມີການຫົດ ແລະ ເຮັດໃຫ້ເຈັບຫົວ.

**2. ເຈັບຫົວຂ້າງດຽວ, ເຈັບຫົວທີ່ຂະມັບ ຫຼື ໄມເກຣນ**

ອາການເຈັບຫົວບໍລິເວນຂະມັບຂ້າງໃດຂ້າງໜຶ່ງ, ເຈັບຫົວຂ້າງດຽວ ຫຼື ອາດຈະສະຫຼັບກັນຊ້າຍ-ຂວາ ໂດຍຈະມີອາການເຈັບຫົວຕຸບໆ ແລະ ໃນເວລາທີ່ເຈັບບາງຄັ້ງອາດຈະມີຄວາມເຈັບປວດເບົ້າຕາຮ່ວມນຳ ຫຼື ບາງຄົນອາດຈະມີອາການປວດຮາກ, ເປັນວິນ ນັ້ນແມ່ນອາການເຈັບຫົວແບບໄມເກຣນ ເຊິ່ງສາເຫດມາຈາກການເຮັດວຽກຂອງຜິດປົກກະຕິຂອງລະບົບໄຟຟ້າໃນສະໝອງ ເຮັດໃຫ້ການໝູນວຽນຂອງເລືອດ ເຮັດໃຫ້ເສັ້ນເລືອດຂະຫຍາຍໃຫຍ່ຂຶ້ນ ແລະ ອັກເສບ ຈຶ່ງເຮັດໃຫ້ພວກເຮົາເຈັບຫົວ.

**3. ເຈັບຫົວຢູ່ຈຸດໃຈກາງຂອງໃບໜ້າ ຫລື ໂລກໄຊນັດ**

ອາການຕ່າງໆເຈັບຫົວຢູ່ບໍລິເວນໄຊນັດມີອາການເຈັບເລື້ອຍໆຈາກແກ້ມທັງສອງເບື້ອງຮອດໜ້າຜາກ ລວມທັງບໍລິເວນດັງລະຫວ່າງຄິ້ວ ແລະ ຫົວຕາ ພ້ອມທັງອາການຫາຍໃຈຕິດຂັດ, ເຈັບແຂ້ວ, ໄອ, ເຈັບຄໍ, ໄຂ້ ແລະອ່ອນເພຍ, ມີນ້ຳມູກສີຂຽວ ຫລື ເຫລືອງທີ່ເກີດຈາກຍ້ອນເຍື່ອຫຸ້ມໄຊນັດອັກເສບ ຫລື ເຊື້ອແບັກທີເລຍຈຶ່ງເຮັດໃຫ້ເກີດອາການໃຄ່ຂອງເນື້ອເຍື່ອໃນດັງ, ຄັນດັງ, ນ້ຳມູກໄຫຼນຳ.

**4. ເຈັບຫົວຢູ່ບໍລິເວນຄາງກະໄຕ**

ສຳລັບອາການເຈັບຫົວທີ່ເກີດຂຶ້ນຢູ່ດ້ານໜ້າຂອງຫູ, ຫົວ, ຂະມັບ, ໜ້າຫູ, ໃນຫູ, ຄາງກະໄຕ ແລະ ແຂ້ວ ພ້ອມກັບການຍ້ຳອາຫານ ແມ່ນອາການເຈັບຫົວຂອງພະຍາດຂອງຂໍ້ຄາງກະໄຕ ແລະ ກ້າມເນື້ອບິດຄ້ຽວ ໂດຍມີອາການອ້າປາກບໍ່ໄດ້ ສ່ວນຫລາຍມັກຈະເກີດຂຶ້ນກັບຄົນທີ່ມີການບາດເຈັບກະດູກຂໍ້ຕໍ່, ຄາງກະໄຕ ແລະ ກ້າມເນື້ອບິດຄ້ຽວ.

**5. ເຈັບຫົວຮຸນແຮງ**

ການເຈັບຫົວລັກສະນະນີ້ຈະມີອາການເຈັບທີ່ຮຸນແຮງ ແລະ ເກີດຂຶ້ນຢ່າງກະທັນຫັນ ໂດຍມີອາການເຈັບຫົວເບື້ອງດຽວ, ເຈັບບໍລິເວນຕາ ເຊິ່ງອາດເກີດຕໍ່ເນື່ອງເປັນເວລາຫລາຍຊົ່ວໂມງ ແລະ ການເບິ່ງເຫັນຜິດປົກກະຕິ, ເບິ່ງບໍ່ເຫັນ, ມີພາບຊ້ອນ, ຕາມົວ, ກ້າມເນື້ອມຶນຊາ ຫຼື ອ່ອນເພຍ, ຊັກ, ເປັນໄຂ້, ຄໍແຫ້ງ, ນ້ຳມູກໄຫລ, ຕາແດງ, ວິນຫົວ, ອັນເນື່ອງມາຈາກການເຮັດວຽກຜິດປົກກະຕິຂອງລະບົບສະໝອງ ສ່ວນທີ່ເຮັດໜ້າທີ່ໃນການຄວບຄຸມຮໍໂມນນອນຫລັບ ລວມເຖິງອຸນຫະພູມຂອງຮ່າງກາຍ ເຮັດໃຫ້ເສັ້ນເລືອດບໍລິເວນໃບໜ້າຂະຫຍາຍໃຫຍ່ຂຶ້ນ ຈຶ່ງເຮັດໄປທັບເສັ້ນປະສາດທົ່ວໃບໜ້າ ເຊິ່ງຖ້າມີອາການເຫລົ່ານີ້ເກີດຂຶ້ນຄວນໄປພົບທ່ານໝໍດ່ວນ.

## ອາດກະວີລາວ

# 2 ດີ 5 ເປັນເຈົ້າ

**# ໂດຍ: ເຂັຍໃຕ້**

❊ ບັດນີ້ ຮຽມຊິຂານຂ່າວຂໍ້
ຄຳຂວັນຂອງກຳມະບານລາວ
ພໍໄດ້ຈົດເອົາໄວ້
ຖືເປັນຄຳຂອດຂໍ້

ຂຽນຂີດເປັນອັກສອນ
ຜ່ານຄຳລຳກະວີເວົ້າ
ໃນໃຈຈຳຈື່
ເຮົາໄດ້ແຂ່ງຂັນ

❊ ສອງດີ ກ່າວໄວ້ນັ້ນ
ໃຫ້ພະນັກງານ-ລັດຖະກອນ
ຮູ້ຈັກນຳພາສ້າງ
ຊ່ວງເສັງກັນຊ່ວຍຍູ້

ວາງເພື່ອເປັນມາດຖານ
ເດັ່ນດີໂດຍແທ້
ຂະບວນກຳມະບານເກັ່ງ
ຊູຊ້ອນຊາດປະຊາ

❊ ກຳມະບານດີ 5 ເປັນເຈົ້າ
ເຈົ້າໜຶ່ງ ຄືໂຄສະນາ
ການເມືອງທັງກຳໄດ້
ແນວຄິດດີຖືກຕ້ອງ

ເຮົາໄຄວ່ຄວນຈຳ
ເພື່ອສຶກສາເລື້ອງ
ແນວທາງອັນໃສສ່ອງ
ມອງກວ້າງເບິ່ງໄກ

❊ ເຈົ້າສອງ ຄວນເຮັດໃຫ້
ພັດທະນາກຳມະບານ
ເປັນອົງການນຳໜ້າ
ເປັນຫຼັກການກໍ່ໃຫ້

ສານແກ່ນອົງການ
ຮຸ່ງເຮືອງຈະເລີນກ້າວ
ຕາມການນຳຂອງພັກ
ກຳມະບານກ້າວວ່ອງໄວ

❊ ເຈົ້າສາມ ປົກປ້ອງໄວ້
ເອົາສ່ວນລວມເປັນຫຼັກ
ເປັນຕົວແທນປົກປ້ອງ
ອັນຊອບທຳທ່ຽງແທ້

ສິດຜົນປະໂຫຍດຂອງປວງຊົນ
ເພື່ອຮັກສາສິດໄວ້
ສິດທັງຜົນປະໂຫຍດ
ຂອງຊາວຜູ້ອອກແຮງງານ

❊ ເຈົ້າສີ່ ກຳມະບານລາວຮ່ຳຮູ້
ເພື່ອກວດກາວຽກງານ
ວຽກສັງຄົມກໍກຳໄດ້
ວັດທະນະທຳຮອບຮູ້

ໂຮມຮ່ວມຕິດຕາມ
ເສດຖະກິດຄອງຄຸ້ມ
ໂດຍດີທັງລະອຽດ
ຄຽງຂ້າງຄູ່ກັນ

❊ ເຈົ້າຫ້າ ຮູ້ຈັດຕັ້ງ
ການຮ່ວມມືສາກົນ
ບໍ່ປ່ຽນແປງຜັນປີ້ນ
ທິດທາງພັກວາດໄວ້

ປະຕິບັດວຽກແນວທາງ
ທີ່ພັກວາງລົງໄວ້
ຫັນໄປແນວໃໝ່
ເຮົາຕ້ອງຈື່ໃສ່ໃຈ ແທ້ແລ້ວ!



## ຫົກຫາຍ ລະບາຍ

**(ເລື່ອງເບົາໆ ເອົ້າແບບກັນເອງ ບໍ່ເຄັ່ງພິທີການ)**

**# ສາວຈົ້ມ**

❊ **ເດືອນ**ມັງກອນ ຜ່ານພົ້ນໄປ ເຫດການປ່ຽນແປງໃໝ່ທີ່ຫລາຍຄົນລໍຄອຍຢ່າງໃຈຈົດໃຈຈໍກໍມາເຖິງ ນັ້ນກໍຄືອາລະການ**ສິ້ນສຸດທຸລະກິດຮ້ານແລກປ່ຽນເງິນຕາ 113** ຮ້ານ ຕາມແຈ້ງການເລກທີ **01/ທຫລ ສະບັບລົງວັນທີ 13 ມັງກອນ 2023** ຕາມເນື້ອໃນບອກແຈ້ງ ຖະແຫຼງກ່າວຢຸດເຊົາການແລກປ່ຽນເງິນຕາ ຢູ່ບັນດາສາຂາຮ້ານ ບອກກັບຄະນະລັດຖະບານກໍເຄື່ອນເໜັງຫຍັບຍ້າຍ ປັບປຸງແປງປ່ຽນຫລັງວ່າພາຍພາກໜ້າ ເສດຖະກິດຊິປ່ຽນປື້ນ ເງິນກີບແຂງຄ່າຂຶ້ນ ລາວຊິກ້າວກວ່າເດີມ **ອົ້ມເຊີຍ!**

❊ **ອົ້ມ**ເຊີຍ! ວັນສ້າງຕັ້ງກຳມະບານ ຄົບຮອບ **67 ປີ** (1 ກຸມພາ 195-1 ກຸມພາ 2023) ຢ່າງສົດໃສ ແລະ ເນື່ອງໃນໂອກາດສະເຫລີມສະຫຼອງວັນສ້າງຕັ້ງຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ຄົບຮອບ **65 ປີ** ທີ່ຈະມາເຖິງນີ້ (**14 ເມສາ 1955-14 ເມສາ 2023**) ທີ່ສະພາແຫ່ງຊາດ ໄດ້ຈັດພິທີປະດັບຫລຽນກາລະບຶກ ໃຫ້ຄະນະບໍາ, ຄະນະບໍລິຫານງານຊາວໜຸ່ມ, ຄະນະໜ່ວຍຮາກຖານຊາວໜຸ່ມ ແລະ ສະມາຊິກຊາວໜຸ່ມສະພາແຫ່ງຊາດ ໃນວັນທີ **1 ກຸມພາ** ລໍອົ້ມອີກຄັ້ງ ຊາວໜຸ່ມຂອງສະພາ ໃນນາມເປັນ**ແຂນຂວາ** ພັກຜູ້ນຳພາສ້າງ ໃນນາມເປັນ**ກະດູກສັນຫຼັງຂອງຊາດ** ເໜືອນ**ອິນຊີ**ທີ່ກ້າແກ່ງ ບໍ່ຫວັ່ນເກງຢ້ອນຢ້ານ ລົມຮ້າຍພາຍຸແຮງນັ້ນແລ້ວ **ອົ້ມເຊີຍ!**

## ຊວນຍິ້ມ

**# ແອ່ນຕຸ້ງ**



**ເລື່ອງ: ເທວະດາ**

ມື້ໜຶ່ງເທວະດາລົງມາຈາກຟ້າ ເພື່ອສັງເກດເບິ່ງມະນຸດທັງຫລາຍວ່າ ໃຜມີບັນຫາຈະໃຫ້ຊ່ວຍ, ໃຜເຮັດຊົ່ວກໍຈະພາໄປລົງນາຮົກ ເພີ່ນຕັດສິນໃຈໄປເຂົ້າຮ້ານເຫລົ້າ ແລະກໍໄປແນະນຳຕົວ:

ເທວະດາ: ຂ້ອຍຄືເທວະດາລົງມາເບິ່ງໂລກມະນຸດ ຊາຍຄົນໜຶ່ງເວົ້າຂຶ້ນວ່າ: ຮ້ວາຍ! ບໍ່ແມ່ນຜີບ້າເບາະນີ້; ລອງປົ່ວຊີກາກຂ້ອຍເບິ່ງຖ້າແມ່ນເທວະດາແທ້, ເທວະດາກໍເອົາມືບາຍກົ້ນຈົນຊີກາກດີກັບບາດ, ຫລັງຈາກນັ້ນກໍເລີ່ມບາຍຄົນທີ່ເປັນພະຍາດສ່ວນຕົວຫລາຍໆຄົນ; ພໍໄປຮອດພະນັກງານຄົນໜຶ່ງເທວະດາກໍາລັງຊິບາຍ, ລາວເລີຍເວົ້າຂຶ້ນວ່າ:

- ຢ່າບາຍຂ້ອຍເດີ
- ອ້າວ ບໍ່ຢາກດີຫວາ?
- ບໍ່! ຄັນທ່ານບາຍ ຂະນ້ອຍກະດີຕວ່າ, ແຮ່ງຫາກະຊຽນໃບລາພັກບໍ່ສະບາຍມື້ວານນີ້ເອງ
- ???

## ຄະຕິເຕືອນໃຈ

**# ດອກສະຍອມ**

ດິນຈະດີຫຼືບໍ່ດີ
ໃຫ້ເບິ່ງທີ່ຕົ້ນໄມ້ໃບຫຍ້າ
ຄົນຈະມີຄ່າ ໃຫ້ເບິ່ງທີ່ຄໍາເວົ້າ
ກິລິຍາ ແລະ ການກະທໍາ




# ຜູ່-ຜູ້

ການຖົກຖຽງກັນເລື່ອງການນຳໃຊ້ຄຳທີ່ມີຄວາມໝາຍວ່າ "ຄົນ" ວ່າຕ້ອງໃຊ້ "ຜູ່" ຫຼື "ຜູ້" ແມ່ນມີມາໄດ້ຫຼາຍສິບປີແລ້ວ. ເຖິງຈະມີນັກວິຊາການດ້ານພາສາອອກມາອະທິບາຍ ແຕ່ການຖົກຖຽງເລື່ອງນີ້ກໍຍັງປາກົດມີຢູ່. ເພື່ອເປັນບ່ອນອີງໃນການໃຊ້ຄຳດັ່ງກ່າວ ໃຫ້ຖືກຕ້ອງຕາມຍຸກສະໄໝ, 'ພາສາລາວມື້ລະຄຳສອງຄຳ' ຂໍນຳສະເໜີປະຫວັດຄວາມເປັນມາຂອງການໃຊ້ຄຳນີ້ ເຊິ່ງມີລາຍລະອຽດດັ່ງຕໍ່ໄປນີ້:

ກ່ອນປີ 1920 ການຈານພາສາລາວໃສ່ໃບລານ ຫຼື ຂຽນພາສາລາວໃສ່ເຈ້ຍນັ້ນ ເພິ່ນຍັງບໍ່ທັນໄດ້ກຳນົດເຄື່ອງໝາຍວັນນະຍຸດໃສ່ໃນແຕ່ລະຄຳສັບຢ່າງເປັນກົດຈະລັກສະນະ. ດັ່ງນັ້ນ ຄຳທີ່ມີຄວາມໝາຍວ່າ "ຄົນ" ທີ່ໄດ້ຍົກຂຶ້ນມານີ້ ຈຶ່ງຂຽນເປັນ "ຜູ" ເຊິ່ງຜູ້ອ່ານຕ້ອງໄດ້ອອກສຽງຕາມບໍລິບົດທີ່ຄຳປາກົດຢູ່. ຍ້ອນບໍ່ມີເຄື່ອງໝາຍວັນນະຍຸດນີ້ແລ້ວ ຈຶ່ງພາໃຫ້ຄູບາທີ່ເທດໂດຍອາໄສໃບລານອ່ານຊ້າ ແລະ ຕ້ອງຫຼິ້ນສຽງໃຫ້ຍືດຍາວໄປ ເພື່ອໃຫ້ມີເວລາຄຶດຫາຖ້ອຍຄວາມໃນເລື່ອງນັ້ນໆກ່ອນ ບໍ່ດັ່ງນັ້ນ ກໍຈະບໍ່ໄດ້ຄວາມໝາຍເລີຍ.

ດ້ວຍເຫດແຫ່ງຄວາມຫຍຸ້ງຍາກໃນການອ່ານຄຳທີ່ມີສຽງວັນນະຍຸດແຕກຕ່າງກັນນັ້ນ, ເພິ່ນຈຶ່ງໄດ້ກຳນົດເຄື່ອງໝາຍວັນນະຍຸດເຂົ້າມາໃສ່ໃນລະບົບຕົວອັກສອນລາວ ເພື່ອເຮັດໃຫ້ການອ່ານຄຳທີ່ມີສຽງວັນນະຍຸດນັ້ນງ່າຍຂຶ້ນ.

ທຳອິດ, ຄຳທີ່ມີຄວາມໝາຍວ່າ "ຄົນ" ນີ້ ເພິ່ນສະກົດເປັນ "ຜູ້" ເຊິ່ງມີຫຼັກຖານຢູ່ໃນປຶ້ມແບບສອນອ່ານພາສາລາວ ປີ 1932 ແລະໃນປຶ້ມແບບສອນອ່ານ ປ ປາ ປີ 1952.

ຕໍ່ມາໃນປີ 1953 ຄະນະກຳມະການວັນນະຄະດີລາວໄດ້ປະຊຸມຕົກລົງກັນໃຫ້ຂຽນເປັນ "ຜູ່" ເຊິ່ງການສະກົດແບບນີ້ໄດ້ຖືກນຳໃຊ້ໃນປຶ້ມແບບຮຽນແລະສື່ສິ່ງພິມຕ່າງໆ. ພ້ອມກັນນັ້ນ ຢູ່ໃນວັດຈະນານຸກົມພາສາລາວຂອງຄະນະກຳມະການວັນນະຄະດີລາວ ປີ 1960 ຮຽບຮຽງໂດຍ ມະຫາສີລາ ວີລະວົງ ກໍໄດ້ບັນຈຸຄຳ "ຜູ່" ໃສ່ ເຊິ່ງໃຫ້ນິຍາມວ່າ "ເປັນຄຳນາມໝາຍເຖິງ "ຄົນ" (ຜູ່ໃດ=ຄົນໃດ)...". ຄຽງຄູ່ກັນນັ້ນ ເພິ່ນກໍໄດ້ນິຍາມຄຳ "ຜູ້" ວ່າ ເປັນຄຳວິເສດ ເປັນຄຳບອກເພດຊາຍຂອງສັດ ດັ່ງ ໄກ່ຜູ້, ມ້າຜູ້, ປາຜູ້ ເປັນຕົ້ນ. ແລະ ຍັງນິຍາມຕື່ມວ່າ "ຜູ້" ເປັນຄຳນາມກໍໄດ້ ເຊິ່ງໝາຍເຖິງ "ຄົນ" ໃຊ້ໄດ້ດັ່ງດຽວກັນກັບ "ຜູ່" ໃນເວລາແຕ່ງກອນທີ່ຕ້ອງການຄຳໂທ.

ຕໍ່ມາປີ 1967 ໃນໄວຍາກອນຂອງທ່ານພູມີ ວົງວິຈິດທີ່ໃຊ້ໃນເຂດປົດປ່ອຍແມ່ນກຳນົດໃຫ້ຂຽນເປັນ "ຜູ້". ຕົກມາໃນປີ 1973 ລາຊະບັນດິດສະພາລາວທີ່ວຽງຈັນກໍໄດ້ກຳນົດໃຫ້ຂຽນ "ຜູ້" ເຊັ່ນດຽວກັນ.

ເມື່ອຕົກມາເຖິງປີ 1975 ສປປ ລາວໄດ້ຮັບການສ້າງຕັ້ງຂຶ້ນ ແລະ ຫຼັກການຂຽນພາສາລາວຕາມສຽງແບບຂອງທ່ານພູມີ ວົງວິຈິດ ກໍໄດ້ຮັບການນຳໃຊ້ເຂົ້າໃນລະບົບການສຶກສາຂອງລາວ ແລະການຂຽນຄຳນີ້ ກໍເປັນ "ຜູ້" ຈົນມາເຖິງປັດຈຸບັນ.

ແຕ່ກໍມີໄລຍະໜຶ່ງ ລະຫວ່າງປີ 2013-2015 ທີ່ທາງສະພາແຫ່ງຊາດໄດ້ອອກກົດໝາຍຫຼາຍສະບັບທີ່ສະກົດຄຳນີ້ເປັນ "ຜູ່", ແຕ່ເພື່ອເປັນເອກະພາບໃນປີຕໍ່ມາຈົນເຖິງປັດຈຸບັນ ກົດໝາຍແຕ່ລະສະບັບລ້ວນແຕ່ສະກົດເປັນ "ຜູ້".

ໃນວັດຈະນານຸກົມຂອງ ດຣ. ທອງຄຳ ອ່ອນມະນີສອນ ປີ 1992 ແລະ ວັດຈະນານຸກົມພາສາລາວຂອງສະຖາບັນວິທະຍາສາດສັງຄົມແຫ່ງຊາດ ປີ 2012 ລ້ວນແຕ່ບັນທຶກຄຳວ່າ "ຜູ້" ໄວ້ໃນປະມວນຄຳສັບຂອງຕົນ.

"ຜູ້" ທີ່ມີໃນວັດຈະນານຸກົມທັງ 2 ເຫຼັ້ມດັ່ງກ່າວ ມີສອງຄວາມໝາຍ:

1. ຄຳນາມ ໝາຍເຖິງ ຄົນ ເຊັ່ນ ຜູ້ໃດ ຄົນໃດ ຜູ້ຄົນ...

2. ຄຳຄຸນນາມ ໝາຍເຖິງ ຄຳບອກເພດເຖິກ ສຳລັບສັດ ເຊັ່ນ ໄກ່ຜູ້, ເປັດຜູ້ ດັ່ງນີ້ເປັນຕົ້ນ.

ດັ່ງນັ້ນ, ຈຶ່ງຖືວ່າ 'ຜູ້' ທີ່ມີຄວາມໝາຍວ່າ "ຄົນ" ເປັນການສະກົດທີ່ຖືກຕ້ອງຕາມຫຼັກການຂຽນຂອງໄວຍາກອນລາວປັດຈຸບັນ.



# ນາຍົກລັດຖະມົນຕີອັງກິດ ສັ່ງປົດຫົວໜ້າພັກຄອນເຊີເວທິບ



ທ່ານ ຣິຊິ ຊູນັກ ນາຍົກລັດຖະມົນຕີອັງກິດ ສັ່ງປົດທ່ານ ນັດຮິມ ຊາຮາວີ ຫົວໜ້າພັກຄອນເຊີເວທິບ ແລະ ລັດຖະມົນຕີລອຍ (Minister Without Portfolio) ເຊິ່ງບໍ່ໄດ້ສັງກັດກະຊວງໃດກະຊວງໜຶ່ງ ແຕ່ມີສິດລົງຄະແນນສຽງໃນມະຕິຂອງຄະນະລັດຖະບານໃຫ້ພົ້ນຈາກຕຳແໜ່ງໃນລັດຖະບານຊຸດປັດຈຸບັນແລ້ວ ໃນວັນທີ 29 ມັງກອນ ຕາມເວລາທ້ອງຖິ່ນ ຫລັງຈາກຜົນການສືບສວນຊີ້ວ່າ: ທ່ານ ນັດຮິມ ຊາຮາວີ ລະເມີດຈັນຍາບັນຂອງການເປັນລັດຖະມົນຕີ ໂດຍທ່ານບໍ່ເປີດເຜີຍວ່າຕົນເອງເຄີຍຖືກກວດສອບກ່ຽວກັບຄະດີການຈ່າຍພາສີ.

ທ່ານ ເຊີ ລໍຣີ ແມັກນັດ ທີ່ປຶກສາອິດສະຫຼະທີ່ໄດ້ຮັບມອບໝາຍໃຫ້ສືບສວນກໍລະນີດັ່ງກ່າວຢືນຢັນວ່າ: ທ່ານ ນັດຮິມ ຊາຮາວີ ລະເມີດຈັນຍາບັນຂອງການເປັນລັດຖະມົນຕີຢ່າງຮ້າຍແຮງແທ້ ໂດຍທ່ານ ນັດຮິມ ຊາຮາວີ ບໍ່ໄດ້ເປີດເຜີຍລາຍລະອຽດຂອງລາຍຮັບ ແລະ ເປີດເຜີຍລາຍລະອຽດຂອງລາຍຮັບ ແລະ ຂໍ້ມູນກາງຕໍ່ກັບແລະແຕ່ໄລຍະທີ່ທ່ານໄດ້ຮັບການແຕ່ງຕັ້ງໃຫ້ດຳລົງຕຳແໜ່ງລັດຖະມົນຕີກະຊວງການເງິນໃນສະໄໝຂອງອະດີດນາຍົກລັດຖະມົນຕີ ບໍຣິສ ຈອນສັນ ແລະ ລົ້ມເຫຼວໃນການເປີດເຜີຍຂໍ້ມູນນີ້ ຂະນະທີ່ດຳລົງຕຳແໜ່ງສຳຄັນໃນລັດຖະບານຊຸດປັດຈຸບັນ ເຖິງວ່າກົມພາສີອາກອນແຫ່ງອັງກິດ (HMRC) ໄດ້ເຂົ້າມາກວດສອບປະຫວັດການຈ່າຍພາສີຂອງທ່ານ ດົນກວ່າ 1 ປີແລ້ວກໍຕາມ.

ທ່ານ ເຊີ ລໍຣີ ແມັກນັດ ຍັງຂຽນລາຍງານສະຫຼຸບຜົນການສືບສວນໃຫ້ທ່ານ ຣິຊິ ຊູນັກ ຮັບຮູ້ ໂດຍລະບຸວ່າ: ການທີ່ທ່ານ ນັດຮິມ ຊາຮາວີ ຕັດສິນໃຈປົດບັງເລື່ອງນີ້ໄວ້ ເປັນສິ່ງທີ່ບໍ່ຜ່ານເກນມາດຕະຖານຈະລິຍະທຳຂັ້ນສູງໃນຖານະລັດຖະມົນຕີ ເຊິ່ງໃນຖານະທີ່ທ່ານເປັນນາຍົກລັດຖະມົນຕີອັງກິດນັ້ນຄືສິ່ງທີ່ທ່ານຄາດຫວັງຈາກບັນດາສະມາຊິກທີ່ຢູ່ໃນລັດຖະບານຂອງທ່ານ.

ທ່ານ ນັດຮິມ ຊາຮາວີ ຍອມຮັບວ່າ: ສິ່ງທີ່ເກີດຂຶ້ນເກີດຈາກຄວາມບົກຜ່ອງທີ່ທ່ານບໍ່ໄດ້ເປີດເຜີຍຂໍ້ມູນລາຍຮັບຕໍ່ເຈົ້າໜ້າທີ່ລັດຢ່າງຖືກຕ້ອງເໝາະສົມ. ພ້ອມທັງຢືນຢັນວ່າ: ຕົນເອງບໍ່ໄດ້ມີເຈດຕະນາຈະຫຼົບຫຼີກການຈ່າຍພາສີ ຫຼື ຈ່າຍພາສີໜ້ອຍກວ່າທີ່ຄວນຈະເປັນ ແລະ ຊີ້ແຈງວ່າທ່ານໄດ້ຊຳລະໂທດປັບໃໝໃຫ້ HMRC ແລ້ວ.

ແຫຼ່ງຂ່າວ: Laophattana

# ທະນາຄານພັດທະນາອາຊີສະໜອງເງິນກູ້ 500 ລ້ານໂດລາ ໃຫ້ແກ່ຟີລິບປິນ



ຕາມການລາຍງານຂ່າວໃຫ້ຮູ້ວ່າ: ວັນທີ 27 ມັງກອນຜ່ານມາ, ທະນາຄານພັດທະນາອາຊີ ຫຼື ADB ໄດ້ເປີດເຜີຍໃຫ້ຮູ້ວ່າ: ທະນາຄານ ADB ໄດ້ອະນຸມັດເງິນກູ້ລັກສະນະນະໂຍບາຍ ຈຳນວນ 500 ລ້ານໂດລາງວດໜຶ່ງ ເພື່ອຊ່ວຍເຫຼືອລັດຖະບານຟີລິບປິນໃນດ້ານການຊຸກຍູ້ການພັດທະນາເສດຖະກິດກະສິກຳ, ຮັບປະກັນຄວາມໝັ້ນຄົງດ້ານສະບຽງອາຫານເປັນໄລຍະສັ້ນ ແລະ ໄລຍະຍາວ.

ດິນຟ້າອາກາດທີ່ຮ້າຍແຮງ ແລະ ຜົນກະທົບດ້ານເສດຖະກິດໄດ້ເຮັດໃຫ້ພາກສ່ວນກະສິກຳຍົກສູງກຳລັງການຜະລິດນັ້ນມີຄວາມຫຍຸ້ງຍາກກວ່າເກົ່າ. ເງິນກູ້ງວດນີ້ຂອງທະນາຄານ ADB ຈະສະໜັບສະໜູນຟີລິບປິນສ້າງພາກສ່ວນກະສິກຳທີ່ມີຄວາມສາມາດແຂ່ງຂັນ ແລະ ມີຄວາມກວມລວມ, ຍົກສູງປະສິດທິພາບ, ເພີ່ມທະວີຄວາມຫຼາກຫຼາຍ, ເພີ່ມທະວີຄວາມສາມາດດ້ານການຮັບມືກັບບັນຫາດິນຟ້າອາກາດ ແລະ ເພີ່ມລາຍຮັບດ້ານກະສິກຳ, ເພື່ອບັນລຸຄວາມໝັ້ນທ່ຽງດ້ານສະບຽງອາຫານ.

**ແຫຼ່ງຂ່າວ: CRI**

# UNESCO ອະນຸມັດໃຫ້ປະເພນີສົງການໄທ ເຂົ້າສູ່ລະບົບບັນຊີລາຍຊື່ເບື້ອງຕົ້ນ ເພື່ອພິຈາລະນາຂຶ້ນທະບຽນເປັນມໍຣະດົກໂລກ



ອີງຕາມການລາຍງານຂ່າວໃນວັນທີ 24 ມັງກອນ 2023 ໃຫ້ຮູ້ວ່າ: UNESCO ໄດ້ອະນຸມມັດໃຫ້ປະເພນີສົງການໄທ (Songkran in Thailand, traditional Thai New Year festival) ເຂົ້າສູ່ລະບົບບັນຊີລາຍຊື່ເບື້ອງຕົ້ນ (Tentative list) ເພື່ອພິຈາລະນາໃນທີ່ປະຊຸມໃຫ້ເປັນ "ມໍຣະດົກທາງວັດທະນະທຳ" ລຳດັບ 4 ຂອງໄທ.

ກ່ອນໜ້ານີ້ ປະເທດໄທໄດ້ຮັບການຂຶ້ນທະບຽນມໍຣະດົກໂລກພູມປັນຍາທາງວັດທະນະທຳແລ້ວ 3 ຢ່າງຄື: "ໂຂນ" ຖືກຮອງຮັບເອົາໃນປີ 2018, "ນວດໄທ" ໃນປີ 2019 ແລະ "ການລຳໂນຣາ" ທາງພາກໃຕ້ ໃນປີ 2021.

ການສະເໜີເອົາສົງການໄທ ເປັນມໍລະດົກວັດທະນະທຳ ໂດຍຄະນະກຳມະການສົ່ງເສີມ ແລະ ຮັກສາມໍຣະດົກພູມປັນຍາ ຄັ້ງທີ 1 ໃນປີ 2022 ເຊິ່ງຄາດວ່າ ຈະໄດ້ຮັບການພິຈາລະນາໃນທ້າຍປີ 2023 ນີ້.

**ແຫຼ່ງຂໍ້ມູນ: THAIPBS**



ໂລກນີ້ ກໍຄືຍໆໄກ່ ແຕ່ລະຕົວໃນຍາງນັ້ນ ຈະລົງທົ່ວກັນເອງ ໄປຕະຫຼອດເວລາ ຈົນກວ່າຈະຕົກລ້າ

## ເບິ່ງໄວ້ ໄດ້ບົດຮຽນ

ວິເສດ ສະແຫວງສຶກສາ

# ມາດຕະການເຂັ້ມງວດເພື່ອຄຸ້ມຄອງລະບົບ ລົດສົ່ງ ແລະ ການປະພຶດຂອງຜູ້ໂດຍສານ

ໃນຄໍລຳ "ເບິ່ງໄວ້ໄດ້ບົດຮຽນ" ເມື່ອອາທິດຜ່ານມາ ຜູ້ຂຽນໄດ້ສະເໜີບົດຄວາມທີ່ໃສ່ຊື່ວ່າ: ເພື່ອຄວາມສະດວກສະບາຍ ແລະ ປອດໄພ ສຳລັບຜູ້ໂດຍສານ ໂດຍໄດ້ສັງລວມເອົາບົດຮຽນຂອງທາງການ ສປຈີນ ແລະ ການາດາ ກ່ຽວກັບການປະຕິບັດນະໂຍບາຍຕໍ່ຜູ້ໂດຍສານທາງອາກາດ ໃນກໍລະນີຖືກຕົກຄ້າງຍ້ອນຖ້ຽວບິນຊັກຊ້າ ຫຼື ຖືກຍົກເລີກ. ບົດຄວາມໄດ້ປິດທ້າຍດ້ວຍຕົວຢ່າງ ກົດລະບຽບເຫຼັກຂອງສາຍການບິນ ສ.ເກົາຫຼີ ໃນການລົງໂທດຄົນໂດຍສານ ທີ່ດື່ມເຫຼົ້າເມົາແລ້ວກໍອາລະວາດ ຜິດຖຽງຕ່ອຍຕີກັນຢູ່ໃນເຄື່ອງບິນ. ມາຮອດຈຸດນີ້ ເລີຍຄິດຮອດກໍລະນີທີ່ຄ້າຍຄືກັນທີ່ເກີດຂຶ້ນກັບສາຍການບິນອິນເດຍ ແລະ ປາກິດສະຖາ ເມື່ອຫຼາຍປີຜ່ານມາ ເຊິ່ງຜູ້ກໍ່ເຫດໄດ້ຮັບໂທດຢ່າງສາສົມ ເຊັ່ນໃນກາງເດືອນມັງກອນ ປີ 2018. ໃນຖ້ຽວບິນໜຶ່ງຂອງສາຍການບິນອິນເດຍ ໄດ້ເກີດມີການຕ່ອຍຕີກັນລະຫວ່າງນັກບິນສອງຄົນໃນຂະນະທີ່ຍົນກຳລັງບິນຢູ່ກາງອາກາດ. ຜົນຕາມມາກໍຄືທັງສອງຖືກບໍລິສັດການບິນໄລ່ອອກການ ເພາະວ່າໃນເວລາຕ່ອຍຕີກັນນັ້ນ, ທັງສອງໄດ້ປ່ອຍໃຫ້ຍົນບິນໄປຕາມລຳພັງ ເປັນໄລຍະສັ້ນໆ ແຕ່ກໍຖືວ່າເປັນຄວາມສ່ຽງສູງທີ່ສຸດ; ຢູ່ປາກິດສະຖານ ກໍມີເຫດການຜູ້ໂດຍສານໃນຖ້ຽວບິນໜຶ່ງກີດຂວາງບໍ່ໃຫ້ສະມາຊິກລັດຖະສະພາສອງຄົນເຂົ້າໄປໃນເຄື່ອງບິນ ຍ້ອນວ່າທັງສອງເຮັດໃຫ້ຖ້ຽວບິນເສຍເວລາລໍຖ້າເປັນເວລາ 1 ຊົ່ວໂມງ. ຂ່າວບອກວ່າ: ທ່ານຜູ້ແທນທີ່ຊີງກຽດສອງທ່ານນີ້ໄດ້ໃຊ້ອຳນາດບາດໃຫຍ່ ສັ່ງໃຫ້ເຄື່ອງບິນຖ້າພວກຕົນ. ແນ່ນອນເຄື່ອງບິນລໍຖ້າໄດ້, ແຕ່ຜູ້ໂດຍສານກວ່າ 100 ຄົນ ທົນບໍ່ໄດ້ຈຶ່ງພາກັນມາຢືນຕັນປະຕູຍົນໄວ້. ໃນທີ່ສຸດ ສສຊ ທີ່ອວດອຳນາດທັງສອງ ກໍເລີຍຕົກຍົນຟ້ຽງ!.

ສຳລັບ ບົດນີ້ ຜູ້ຂຽນກໍຍັງຂໍຖ້ຽວໆວຽນໆຢູ່ກັບເລື່ອງການໂດຍສານ ແຕ່ເປັນການໂດຍສານຢູ່ໜ້າດິນ ແລະ ໃຕ້ດິນ. ຢູ່ປະເທດຍີ່ປຸ່ນ ໃນປີ 2019 ໄດ້ຈັດໃຫ້ມີການສຳຫຼວດກ່ຽວກັບບັນຫາຜູ້ເຖົ້າຂັບລົດວ່າມີຄວາມສ່ຽງເກີດອຸບັດເຫດໜ້ອຍຫຼາຍປານໃດ. ທີ່ຕ້ອງມີການສຳຫຼວດກໍເພາະວ່າໃນຊຸມປີຫຼັງໆມານີ້ ຈຳນວນປະຊາກອນອາຍຸສູງຢູ່ຍີ່ປຸ່ນນັ້ນໄດ້ເພີ່ມຂຶ້ນຢ່າງຫຼວງຫຼາຍ ແລະ ໄວວາ. ເຖິງຈະມີອາຍຸສູງແຕ່ພວກຜູ້ເຖົ້າຈຳນວນໜຶ່ງກໍຍັງມີຄວາມຈຳເປັນຕ້ອງໄດ້ຂັບລົດໄປມາຕາມທ້ອງຖະໜົນເອົາເອງ. ຜົນການສຳຫຼວດຊີ້ອອກວ່າ 1 ໃນ 4 ຂອງຄົນເຖົ້າທີ່ອາຍຸແຕ່ 80 ປີຂຶ້ນໄປຍັງຈຳເປັນຕ້ອງໄດ້ຂັບລົດດ້ວຍຕົນເອງ. (ສະຖິຕິໃນເດືອນມິຖຸນາ 2019). ສ່ວນອຸບັດເຫດຄັ້ງຮ້າຍແຮງຈາກການຂັບລົດຂອງຄົນເຖົ້າບຳນານອາຍຸ 87 ປີ ຄົນໜຶ່ງຂັບລົດຕຳເດັກຍິງອາຍຸ 3 ປີ ກັບຜູ້ເປັນແມ່ເສຍຊີວິດ ໃນກາງນະຄອນຫຼວງໂຕກຽວ ແລະ ມີຜູ້ຖືກບາດເຈັບອີກ 6 ຄົນ. ໃນເດືອນພຶດສະພາ 2018, ກໍມີຜູ້ເຖົ້າອາຍຸ 90 ປີອີກ ຄົນໜຶ່ງຂັບລົດລ່ວງໄຟແດງໄປຕຳຄົນຍ່າງ 4 ຄົນ ເຮັດໃຫ້ມີການເສຍຊີວິດ 1 ຄົນ. ຜົນການສຳຫຼວດໄດ້ສະຫຼຸບວ່າ ເມື່ອຄົນເຮົາອາຍຸສູງຂຶ້ນ ລະບົບຄວາມຈຳ, ຄວາມສາມາດໃນການສັ່ງຊາຄວາມວ່ອງໄວໃນການຕອບ-ຮັບເຫດການສຸກເສີນທີ່ເກີດຂຶ້ນກໍນັບມື້ຫຼຸດນ້ອຍຖອຍລົງ. ຂ່າວໄດ້ມ້ວນທ້າຍວ່າ ການສຶກສາສຳຫຼວດ ທີ່ຈັດຂຶ້ນໃນເດືອນມິຖຸນາ 2019 ນັ້ນ ໄດ້ກາຍເປັນເຂັມທິດໃຫ້ທາງການຍີ່ປຸ່ນ ຊອກວິທີແກ້ໄຂ ເພື່ອຊ່ວຍໃຫ້ຜູ້ເຖົ້າເຂົ້າເຖິງລະບົບການໂດຍສານທີ່ມີຄວາມປອດໄພກວ່າເກົ່າ.

ບັດນີ້ຂໍກ້ຽວມາໃສ່ເລື່ອງທີ່ເກີດຂຶ້ນຢູ່ສປຈີນ ຄືເລື່ອງການໂດຍສານໃຕ້ດິນທີ່ເອີ້ນວ່າ: ເມໂຕຼ ຫຼື ລົດໄຟໃຕ້ດິນ. ສະຖິຕິ ປີ 2019 ບອກວ່າ ຢູ່ ສປຈີນ ຈຳນວນຜູ້ທີ່ໃຊ້ບໍລິການລົດໄຟໃຕ້ດິນ ຖືກຈັດຢູ່ໃນອັນດັບທີ 2 ຂອງໂລກ ຮອງຈາກຍີ່ປຸ່ນ. ຢູ່ທົ່ວປະເທດຈີນ ໃນເວລານັ້ນມີການບໍລິການລົດໄຟໃຕ້ດິນຢູ່ 33 ຕົວເມືອງໃຫຍ່ຊາວຈີນນິຍົມໂດຍສານທາງໃຕ້ດິນຫຼາຍທີ່ສຸດ ເພາະມີຄວາມສະດວກສະບາຍ, ລາຄາຖືກ, ຕົງເວລາ ທັງເປັນລະບົບໂດຍສານທີ່ບໍ່ສ້າງພາບເອກະລັກໃຫ້ແກ່ຕົວເມືອງ. ໃນທ້າຍປີ 2019, ທາງການຈີນໄດ້ອອກກົດໝາຍລົດໄຟໃຕ້ດິນ ເພື່ອຄຸ້ມຄອງລະບົບໂດຍສານປະເທດນີ້ໃຫ້ເປັນເອກະພາບໃນທົ່ວປະເທດ. ກ່ອນໜ້ານັ້ນ ການຄຸ້ມຄອງລະບົບແມ່ນຂຶ້ນກັບຂໍກຳນົດກົດລະບຽບສະເພາະໃນຕົວເມືອງ ຫຼື ແຂວງ ທີ່ມີລະບົບລົດໄຟໃຕ້ດິນເທົ່ານັ້ນ. ກົດໝາຍລົດໄຟໃຕ້ດິນໄດ້ກຳນົດຫຼາຍໆຂໍ້ຫ້າມ ລວມທັງຫ້າມຜູ້ໂດຍສານເອົາອາຫານເຄື່ອງດື່ມຕິດຕົວເຂົ້າໄປກິນດື່ມພາຍໃນລົດ ຍົກເວັ້ນຜູ້ໂດຍສານທີ່ມີບັນຫາສຸຂະພາບ, ເດັກນ້ອຍ ແລະ ເດັກແດງ, ຫ້າມເປີດເຄື່ອງສຽງເຄື່ອງສາຍສຽງດັງລົບກວນຄົນອື່ນ, ຫ້າມຢືນ ຫຼື ນອນຂວາງຕັ່ງນັ່ງ. ແນ່ນອນວ່າກົດໝາຍສະບັບນີ້ ສ້າງໄດ້ຮັບການປັບປຸງໃໝ່ເປັນກ້າວໆ ດ້ວຍບົດລົງໂທດຕໍ່ຜູ້ລະເມີດກົດໝາຍ ແລະ ຄົງມີລາຍລະອຽດຕື່ມ ກ່ຽວກັບບຸກຄົນທີ່ຖືກຄວນຍົກເວັ້ນຈາກຂໍ້ຫ້າມຕ່າງໆ.






## ນອນລືມຕື່ນ

*# ບ່າວກະບື*

*ທ້າວແກ້ວ ນອນບໍ່ຫຼັບໄດ້ຫຼາຍຄືນແລ້ວ. ເຂົາເລີຍນັດທ່ານໝໍເພື່ອປິ່ນປົວໃຫ້ເຂົາຫາຍຈາກໂລກນອນບໍ່ຫຼັບ. ເຂົາໄປຮອດຄະລີນິກຊ້າກວ່າເວລານັດໜຶ່ງຊົ່ວໂມງ. ທ່ານໝໍຖາມແບບໃຈຮ້າຍວ່າ: "ເປັນຫຍັງເຈົ້າຈຶ່ງຜິດນັດ ເປັນຊົ່ວໂມງພຸ້ນ?"*

*ທ້າວແກ້ວຕອບວ່າ: "ເຮົານອນລືມຕື່ນ"*

## OVER SLEEPING

*# BAOKBU*

Mr. Keo had not slept for many night. He made an appointment with a doctor to be treated for insomnia. He turned up an hour late at the clinic. The doctor asked angrily, "why are you an hour late for your appointment?

Mr. Keo replied: "I over slept".






**ສົ່ງເສີມບົດບາດຂອງຜູ້ເປັນພໍ່**

● ໂດຍ : ສາວສິ້ນແຕ້ມ

ທະນາຄານພັດທະນາລາວ
LDB Bank

**ຜູ້ຊີ້ນຳ :**
ທ່ານ ສີງຄຳ ວົງພະຈັນ

**ຄະນະຊີ້ນຳຊານທີ່ປຶກສາ :**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ຄຳວິສັນ ແກ້ວສຸວັນ

**ຄະນະບັນນາທິການ :**
ທ່ານ ປອ. ພົດສະໄໝ ບຸນວິໄລ ຫົວໜ້າ
ທ່ານ ອັນທະວີ ວົງພະຈັນ ຮອງ ບກ
ທ່ານ ເປຄຳ ລໍຄຳສອນ ຮອງ ບກ

**ກອງບັນນາທິການ :**
ນາງ ກົງໃຈ ແສງອຳພັນ
ນາງ ສຸພາວັນ ທອມສະນິດ
ນາງ ປາກາລັກ ພົມມີໄຊ

**ອອກແບບ - ຈັດໜ້າ :**
ທ່ານ ຄຳຫວັນ ດາລາວົງ
ນາງ ກຸກກິກ ບຸດດາໄຊ
ທ່ານ ສົມນຶກ ແກ້ວໄຊຍະຈັກ